<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2006 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 4
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 5-7
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 5-7
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 8- 1
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-11
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 12-13 & Christmas Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 12-13 & Christmas Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ຈົ່ງກາຍມາເປັນຜູ້ຕິດຕາມພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 9:18-26

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 9:18-50

**ຈຸດສຳຄັນຂອງບົດຮຽນນີ້:** ການຕິດຕາມພຣະເຢຊູໝາຍຄວາມວ່າ ເດີນຕາມເສັ້ນທາງທີ່ພຣະເຢຊູເດີນໄປ, ລວມທັງການກ້າວໄປສູ່ໄມ້ກາງແຂນ.

**ຄຳຖາມເພື່ອສຳຣວດ:** ຍັງອີກດົນປານໃດທ່ານຈຶ່ງຈະຕິດຕາມພຣະເຢຊູ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະສາມາດກ່າວໄດ້ວ່າ ຜູ້ຕິດຕາມພຣະເຢຊູໝາຍຄວາມວ່າຕ້ອງເປັນຜູ້ຮູ້ຈັກຊົ່ງຊາຕີລາຄາໂດຍອີງພຣະເຢຊູ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຄຣູສອນ, ໃຫ້ເລີ້ມຕົ້ນດ້ວຍເຣື່ອງທີ່ຢູ່ໃນເຈັ້ຽບົດຮຽນຊຶ່ງເວົ້າເຣື່ອງປື້ມ. ແຕ່ວ່າຫລັງຈາກນັ້ນລົງມາກໍຈະເຫັນເຣື່ອງການສົນທະນາກັນກ່ຽວກັບເຣື່ອງພຣະເຢຊູວ່າພຣະອົງເປັນຜູ້ໃດ. ຖາມຫ້ອງຮຽນວ່າພວກທີ່ຖາມກັນ, ສົນທະນາກັນນັ້ນແມ່ນຄົນພວກໃດ. ຫລັງຈາກຫລາຍຄົນຕອບແລ້ວໃຫ້ອີງຕາມປື້ມລູກາ ບົດທີ 9 . ສາວົກຂອງພຣະອົງກໍຍັງສົງສັຍຄືກັນ. ພຣະອົງແມ່ນໃຜ? ພຣະອົງມາເຮັດອັນໃດແທ້ໃນແຜ່ນດິນໂລກນີ້?

2. ຂຽນຄຳຖາມເພື່ອສຳຣວດລົງໃນກະດານວ່າ "ຍັງອີກດົນປານໃດທ່ານຈຶ່ງຈະຕິດຕາມພຣະເຢຊູ?"

### ນຳພາສຶກສາພຣະຄັມພີ

3. ຄຳຖາມນີ້ ພວກເຮົາເອົາໄວ້ຕອບຕອນທ້າຍຂອງບົດຮຽນ. ພວກເຮົາມາເລີ້ມຕົ້ນດ້ວຍຄຳຖາມທຳອິດທີ່ວ່າ "ທ່ານຈະໄດ້ຮັບຄຳຕອບຈາກເພື່ອນບ້ານ ຫລືເພື່ອນຮ່ວມງານຢ່າງໃດ ຖ້າທ່ານຖາມເຂົາວ່າ: ພຣະເຢຊູແມ່ນໃຜ? ອ່ານໃນລູກາ 9:18-20. ເມື່ອອ່ານແລ້ວໃຫ້ຖາມວ່າ ພວກເຂົາຕອບຢ່າງໃດແດ່? ແມ່ນເອລີຢາ, ແມ່ນເຢເຣມີຢາ, ແມ່ນໂຢຮັນບັບຕິສໂຕ, ແມ່ນຜູ້ພະຍາກອນ. ແລະທຸກວັນນີ້ເດຄົນທັງຫລາຍຈະຕອບວ່າຢ່າງໃດແດ່. ແມ່ນຫົວໜ້າສາສນາຄຣິດ, ແມ່ນລູກຂອງນາງມາຣີອາ, ແມ່ນລູກຂອງຊ່າງໄມ້....
   ຄຳຕອບເກົ່າແລະຄຳຕອບໃໝ່ເໝືອນກັນບໍ່ ຫລືວ່າແຕກຕ່າງກັນ ເປັນຫຍັງຈຶ່ງເປັນດັ່ງນັ້ນ?

4. ຫັນມາຫາ ລູກາ 9:21-22 ແລະໃຫ້ໃຜຜູ້ນຶ່ງອ່ານ, ຫລາຍຄົນກໍກ່າວວ່າພຣະເຢຊູເປັນຕ່າງໆນາໆ, ເປັນຫຍັງພຣະອົງຈຶ່ງບໍ່ຢາກໃຫ້ພວກເຂົາເອີ້ນພຣະອົງວ່າ ພຣະເມຊີອາ? (ໃຫ້ອະທິບາຍຄຳວ່າພຣະເມຊີອາໃຫ້ນັກຮຽນເຂົ້າໃຈ) ເມຊີອາເປັນຄຳເວົ້າທີ່ມີອຳນາດມີພລັງທາງດ້ານການເມືອງ ແລະທາງດ້ານສາສນາດ້ວຍ. ພຣະອົງມີພຣະປະສົງໃຫ້ມີການໂຈ້ແຍກອອກລະຫວ່າງການເມືອງແລະສາສນາ. ຝູງຊົນທັງຫລາຍແລະພວກສາວົກພາກັນບໍ່ເຂົ້າໃຈວ່າພຣະເມຊີອາຈະມາໃນການຮັບໃຊ້ ແລະມາໃນການສິ້ນພຣະຊົນເພື່ອໄຖ່ຊາວໂລກາ.

ພວກເຂົາພາກັນຕະລຶງ ງຶງງັນເມື່ອພຣະອົງກ່າວວ່າ ບຸດມະນຸດຈະຕ້ອງຕາຍ ແລະຟື້ນຂຶ້ນມາໃນວັນຖ້ວນສາມ.

5. ຄຳເວົ້າຂອງພຣະເຢຊູຍັງບໍ່ທັນສຸດສິ້ນ ພຣະອົງກ່າວຕໍ່ໄປອີກວ່າການຕິດຕາມພຣະອົງຕ້ອງເປັນໄປຕາມຂັ້ນຕອນ ຊຶ່ງຂັ້ນຕອນດັ່ງກ່າວນັ້ນພຣະອົງໄດ້ກ່າວໃນ ຂໍ້ ທີ 23. (1) ຕັດສິດຂອງຕົນ ຊຶ່ງໝາຍຄວາມວ່າຊີວິດເກົ່າຜ່ານໄປ (ກຳລັງຂອງຕົນເອງ, ເປົ້າໝາຍຂອງຕົນເອງ, ຄວາມຮູ້ຂອງຕົນເອງ, ຄວາມຊອບທັມຂອງຕົນເອງ......) (2) ຮັບແບກກາງແຂນທຸກວັນໝາຍຄວາມວ່າ ຮັບຄວາມເຈັບປວດທຸກວັນ, ຖວາຍຕົວທຸກວັນ, ຮັບການທໍຣະມານທຸກວັນເພື່ອພຣະເຢຊູ. (3) ຕິດຕາມພຣະອົງໝາຍຄວາມວ່າ ເດີນຕາມສິ່ງທີ່ພຣະອົງຊົງກະທຳ ແມ່ນວ່າຈະຍາກກໍຕ້ອງຕາມ ຫລືຈະງ່າຍກໍຕ້ອງຕາມ.

6. ຂໍ້ທີ 26 ພຣະເຢຊູຊົງຕັກເຕືອນພວກເຮົາເຖິງຜົນຂອງການຮັບແລະການເຊື່ອຟັງ. ຖ້າຜູ້ໃດຮັບພຣະອົງພຣະອົງກໍຈະຊົງຮັບຜູ້ນັ້ນ ຜູ້ໃດທີ່ລະອາຍເພາະພຣະອົງພຣະອົງກໍຈະມີຄວາມລະອາຍເໝືອນກັນ.

## <u>ນຳໃຊ້ໃນຊີວິດປະຈຳວັນ</u>

7. ນຳພານັກຮຽນສົນທະນາໃນຄຳຖາມ 3-5 ໃນເຈ້ຍບົດຮຽນ

8. ໃຫ້ນັກຮຽນອະທິບາຍຄວາມໝາຍຂອງ "ສາວົກ" ພວກເຂົາພາກັນດຳເນີນຊີວິດຢ່າງໃດ?

9. ພາກັນອ້ອນວອນອະທິຖານໃຫ້ຜູ້ທີ່ຍັງບໍ່ທັນເຂົ້າໃຈໃນການເປັນສາວົກຈົ່ງຕຽມຕົວທີ່ຈະເຂົ້າໄປນະມັສການພຣະເຈົ້າ

*ສຈ. ດຣ. ບຸນໂຮມ ພົມມະຈັນ*

## ຄຳແນະນຳສຳຫລັບຄຣູສອນ
## ບົດຮຽນທີ 2
## ຕິດຕາມພຣະເຢຊູພຽງຜູ້ດຽວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 9:51-62
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 9:51-62
**ຈຸດສຳຄັນຂອງບົດຮຽນນີ້:** ຕິດຕາມພຣະເຢຊູຫມາຍຄວາມວ່າເລືອກເດີນຕາມທາງຂອງພຣະເຢຊູໂດຍສະເພາະ.
**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງຫລືຜູ້ໃດທີ່ທ່ານຈະເດີນຕາມ, ຖ້າທ່ານຫາກເດີນຕາມພຣະເຢຊູແລ້ວ?
**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊັ່ງຊາຕີລາຄາວ່າ ຂ້ອຍມີສິ່ງໃດທີ່ຈຳເປັນກວ່າອົງພຣະເຢຊູ

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ເລີ້ມຕົ້ນດ້ວຍການອະທິບາຍເຖິງການອະລຸ້ມອະລ່ວຍ (ຜ່ອນສັ້ນຜ່ອນຍາວ, ອີດໆອາດໆ, ຄອນແຄນ, ໂຈະໆບາງໆ, ຂີ້ນໆລົງໆ.......) ແບ່ງປັນເຣື່ອງຢູ່ໃນເຈັ້ຽບົດຮຽນ ໄມ້ກາງແຂນແລະຮູບຜູ້ຍິງປະເປືອຍ. ຫລືວ່າທ່ານມີເຣື່ອງອື່ນອີກທ່ານກໍສາມາດເວົ້າໄດ້.

### ນຳພາການສຶກສາພຣະຄັມພີ

2. ເທິງໂຕະ ທ່ານອາດຈະວາງມັດເງິນເຈັ້ຍ (ເງິນປອມ) ຂໍກະແຈຣົດ, ໂທຣະສັບມືຖື, ເຈັ້ຽປະກາດການເດີນທາງ, ບັດນັກທຸຣະກິດ (Business Cards) ຫລື ວ່າຫນັງສືພິມ.
ຖາມຫ້ອງຮຽນວ່າແມ່ນຫຍັງທີ່ທ່ານຈະເລືອກເອົາຕໍ່ຈາກ
ພຣະເຢຊູລົງມາ.

3. ໃຫ້ພາກັນອ່ານ ຂໍ້ພຣະທັມ 9:51-56. ເມື່ອອ່ານຈົບແລ້ວໃຫ້ຄຣູອະທິບາຍຂອງການເດີນທາງຂອງພຣະເຢຊູໄປກຸງເຢຣູຊາເລັມ. ເຂດພູມີສາດແລະເຂດສາສນາສາດເປັນຢ່າງໃດ. ຊາວຊະມາເຣັຽເປັນຢ່າງໃດພວກເຂົາມີຄວາມສັມພັນຢ່າງໃດກັບຄົນຍິວໂດຍທົ່ວໄປ. ກ່ອນຈະເດີນທາງໄປພຣະເຢຊູກໍໄດ້ສົ່ງສາວົກຂອງພຣະອົງໄປລ່ວງຫນ້າເພາະການເດີນທາງນີ້ແມ່ນໄປຖ້ຽວດຽວບໍ່ມີກັບຄືນ. ເປັນຫຍັງພຣະເຢຊູຈຶ່ງຢາກຜ່ານໄປທາງຊະມາເຣັຽ? ຄຳຕອບກໍມີຢູ່ວ່າພຣະເຢຊູຢາກທຳລາຍການລຳອຽງ, ການແບ່ງແຍກ, ການເຫັນແກ່ຕົວເອງຂອງພວກຍິວ. ພວກສາວົກທັງຫລາຍພາກັນເຂົ້າໃຈຍາກໃນການສິດສອນຂອງພຣະອົງ. ໂຢຮັນກັບຢາໂກໂບຂໍອະນຸຍາດຈາກພຣະອົງໃຫ້ເອີ້ນໄຟລົງມາເຜົາຜານພວກເຂົາ ແລະທຳລາຍຊາວຊະມາເຣັຽທັງຫມົດເສັຽ. ພຣະອົງກໍຍັງຫ້າມປາມພວກເຂົາໄວ້.

4. ເຊີນໃຫ້ຄົນນຶ່ງອ່ານ ລູກາ 9:57-62 ຢ່າລືມວ່າຄຳຖາມທີ່ພຣະອົງຊົງຖາມນັ້ນແມ່ນພຣະອົງຊົງຖາມສາວົກ

ຂອງພຣະອົງ.

(ກ) ຂໍ້ 58 ພຣະອົງຕ້ອງການໃຫ້ສາວົກຕິດຕາມພຣະອົງບໍ່ວ່າຈະໄປທີ່ໃດ. ພຣະເຢຊູຊົງເປັນຜູ້ນຳເຮົາຍັງຈະຕ້ອງການສິ່ງໃດຫລືບໍ່ວ່າຈະເປັນການປະເລົ້າປະໂລມຫລືຄວາມປອດພັຍ ພຣະອົງມີໄວ້ສຳຫລັບພວກເຮົາແລ້ວ.

(ຂ) ພຣະເຢຊູບໍ່ຮັບຮູ້ຄຳແກ້ຕົວນັ້ນ. ຂໍ້ 59 ສອນວ່າເມື່ອຕັດສິນໃຈຕິດຕາມພຣະອົງແລ້ວ, ພຣະອົງຈະຕ້ອງເປັນບຸກຄົນສຳຄັນກວ່າສິ່ງອື່ນທັງຫມົດ. ໃຫ້ໃຊ້ເວລາທີ່ເຫລືອຢູ່ໃຫ້ກັບພຣະເຢຊູ ເບິ່ງໃນເອເຟໂຊ 5:15 -16. ຈົ່ງປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າ

(ຄ) ໃນຂໍ້ 61-62 ພຣະເຢຊູໄດ້ອະທິບາຍວ່າຖ້າຜູ້ໃດທີ່ພຣະເຢຊູຊົງຮຽກເອີ້ນ ແລະກໍໃຫ້ກະທຳໂລດຢ່າຖ່ວງດົງເວລາ ແລະຢ່າເຍື້ອນວັນນັ້ນຫລືວັນນີ້ ຫລືວ່າລໍຖ້າໃຫ້ຕົນເອງສະດວກສະບາຍເສັຽກ່ອນ.

<u>**ຫນູນໃຈໃຫ້ມີການກະທຳ:**</u>

5. ສຳຫລັບບົດຮຽນນີ້ນີ້ສຳຄັນຫລາຍ 9:57-62 ແລະຖືກກັບຊີວິດປະຈຳວັນທີ່ຫລາຍຄົນມັກບ່ຽງບ່າຍຕໍ່ການເຊື້ອເຊີນຂອງອົງພຣະເຢຊູ

6. ພຣະເຢຊູຍັງຕ້ອງການສາວົກທີ່ບໍ່ມີການອະລຸ້ມອະລ່ວຍ ຈົ່ງໃຫ້ຄຳຖາມຂອງພຣະເຢຊູຢູ່ໃນຈິດໃຈຂອງທ່ານ. ຂໍ້ 58 "ຫມາຈິ້ງຈອກຍັງມີຮູ ແລະນົກປ່າກໍຍັງມີຮັງ ແຕ່ບຸດມະນຸດບໍ່ມີທີ່ຈະວາງຫົວລົງ." ຂໍ້ 59 "ຈົ່ງຕາມເຮົາມາ" ແລະຂໍ້ 62 "ຜູ້ໃດເອົາມືຈັບງ້ອນໄຖແລ້ວ ຫລຽວຫລັງຄືນ ຜູ້ນັ້ນບໍ່ສົມຄວນກັບຣາຊອານາຈັກຂອງພຣະເຈົ້າ"

- ທ່ານເຂົ້າໃຈຢ່າງໃດ ຈົ່ງໄປປະຕິບັດຢ່າງນັ້ນເຖີ້ນ.

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳຫລັບຄຣູສອນ

## ບົດຮຽນທີ 3

## ຈົ່ງປະກອບສ່ວນໃນການປ່າວປະກາດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 10:1-12; 17-20

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 10:1-24

**ຈຸດສຳຄັນຂອງບົດຮຽນນີ້:** ຕິດຕາມພຣະເຢຊູຫມາຍຄວາມວ່າ ປະກອບສ່ວນໃນການປ່າວປະກາດ

**ຄຳຖາມເພື່ອສຳຣວດ:** ທ່ານກຳລັງຢູ່ໃນການປ່າວປະກາດອັນໃດ?

**ຈຸດປະສົງຂອງບົດຮຽນ:** ຈົ່ງຮັບຟັງແລະ ຮັບຜິດຊອບໃນການຮຽກເອີ້ນຂອງພຣະເຢຊູ ແລ້ວປະກອບສ່ວນໃນການປ່າວປະກາດ

## ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ວາງຄຳຖາມ ຄຳເວົ້າທີ່ກ່າວວ່າ "ເຂົ້າທີ່ຈະກ່ຽວກໍມີຫລາຍແທ້" ມີຄວາມຫມາຍຢ່າງໃດສຳຫລັບທ່ານ? ໃນສັຕວັດທີ 21 ນີ້ ຍັງໃຊ້ການໄດ້ຢູ່ບໍ່ ແລະມັນຖືກກັບສະພາບການຫລືບໍ່? ໃຫ້ແຕ່ລະຄົນຕອບຕາມຄວາມເຂົ້າໃຈ.

### ສຶກສາພຣະຄັມພີ

2. ບອກນັກຮຽນວ່າ ບົດຮຽນສຳຫລັບວັນນີ້ ແມ່ນບົ່ງບອກເຖິງເຂດການປ່າວປະກາດຂອງພຣະເຢຊູ.ໃຫ້ຄົນນຶ່ງອ່ານພຣະທັມຄັມພີ 10:1-3 ໃນຕອນນີ້ກ່າວວ່າ ພຣະເຢຊູໄດ້ຊົງແຕ່ງຕັ້ງເຈັດສິບສອງຄົນອອກໄປລ່ວງຫນ້າພຣະອົງ ໃຫ້ເຂົາອອກໄປທົ່ວທຸກບ້ານທຸກເມືອງ. ແລະຂໍ້ຄວາມຕໍ່ໄປກໍໄດ້ເວົ້າອີກວ່າເຂົ້າທີ່ຈະກ່ຽວກໍມີຫລາຍແທ້ ຊຶ່ງຫມາຍຄວາມວ່າຜູ້ທີ່ຫລົງຫາຍນັ້ນກໍມີຫລາຍແທ້ ແຕ່ຜູ້ທີ່ຈະອອກໄປປະກາດນັ້ນມີຫນ້ອຍບໍ່ພຽງພໍຕໍ່ການປ່າວປະກາດ. ດັ່ງນັ້ນພວກເຮົາຄວນອ້ອນວອນເພື່ອໃຫ້ມີຄົນມາເກັບກ່ຽວຊ່ວຍ. ພວກສາວົກເຫລົ່ານີ້ເປັນຜູ້ທີ່ຫວ່ານພືດທີ່ດີ. ແລະພວກເຮົາກໍເປັນຜູ້ຫວ່ານພືດທີ່ດີເຫມືອນກັນແຕ່ບໍ່ມີຜູ້ໃດທີ່ເກັບກ່ຽວຫມາກຜົນ ຫລືບາງຄົນກໍບໍ່ເຫັນຫມາກຜົນເລີຍ. ແຕ່ລະຄົນມີພາກສ່ວນໃນການປູກຝັງນີ້ ບາງຄົນຫວ່ານບາງຄົນຫົດນ້ຳ ບາງຄົນເກັບກ່ຽວ. ຢ່າງໃດກໍຕາມລະດູເກັບກ່ຽວມາເຖິງແລ້ວ ເຮົາຈຳເປັນຕ້ອງອອກໄປເກັບກ່ຽວແລະເມັດພືດທີ່ຢູ່ໃນນັ້ນກໍພ້ອມແລ້ວທີ່ຈະນຳໄປປູກຝັງໃຫມ່. ຄຣິສຕຽນຄວນຄຳນຶງເຖິງວ່າເຮົາຈຳເປັນ ຈຳເປັນ ຈຳເປັນ ຕ້ອງອອກໄປຫວ່ານພືດ. ພຣະເຢຊູຍັງກ່າວອີກວ່າຈົ່ງໄປເທາະ....ນີ້ແມ່ນຄຳສັ່ງເຮົາໃຊ້ໃຫ້ພວກທ່ານໄປ ເຫມືອນແກະນ້ອຍຢູ່ໃນຖ້າມກາງຝູງຫມາໃນ. ລູກາ 10:3. ຄຳສັ່ງນີ້ເປັນຄຳສັ່ງທີ່ມີອັນຕະລາຍຫລາຍ, ຊຶ່ງມີແຕ່ເພິ່ງອີງພຣະເຢຊູພຽງຜູ້ດຽວເທົ່ານັ້ນ.

3. ອ່ານ ລູກາ 10:4-12 ຄຳແນະນຳທີ່ພຣະເຢຊູຊົງເຕືອນ.
   ຈົ່ງເດີນທາງດ້ວຍສິ່ງຂອງທີ່ເບົາ ແລະຈົ່ງອີງພຣະເຢຊູພຽງຜູ້ດຽວແທນທີ່ຈະອີງໃສ່ວັດຖຸສິ່ງຂອງຢ່າອີງໃສ່ໃຜ

ຜູ້ນຶ່ງ ຈົ່ງປະກາດຢ່າງດຽວ ຈົ່ງຮັບເອົາການຕ້ອນຮັບຂອງຊາວຢິວດ້ວຍຄວາມສງົບສຸກ (10:5) ຈົ່ງອາສັຍຢູ່ ນຳພວກເຂົາ ແລະກິນຢູ່ຕາມທີ່ພວກເຂົາມີຢູ່

4. ຂໍ້ 17-20 ບອກວ່າການປູກຝັງໄດ້ສຳເລັດແລ້ວ ແລະການເກັບກ່ຽວກໍໄດ້ຜົນດີຫລາຍ. ພຣະອົງກໍຊົງຍົກຍ້ອງ ພວກເຂົາ ແລະຕັກເຕືອນຢ້ານວ່າພວກເຂົາຈະເປັນຄົນລືມຕົວ.
   (ກ) ມານຊາຕານໄດ້ຕົກຈາກຟ້າອາດຈະໝາຍຄວາມວ່າມານຊາຕານຈະເສັຽຊັຍ ທ່ານທັງຫລາຍຈະໄດ້ຊັຍຊະນະ ພວກທ່ານຈະມີອຳນາດເໜືອທຸກຢ່າງ. ການປ່າວປະກາດຈະສຳເຣັດດ້ວຍອຳນາດຂອງພຣະເຢຊູພຽງເທົ່ານັ້ນ
   (ຂ) ຄຳສັນຍາ 10:19 ກຳລັງຂອງສັດຕຣູຈະເອົາຊະນະທ່ານບໍ່ໄດ້ເດັດຂາດແລະບໍ່ມີສິ່ງໃດຈະທຳລາຍທ່ານໄດ້
   (ຄ) ຄຳເຕືອນ ຢ່າໄດ້ຍິນດີໃນສິ່ງເຫລົ່ານີ້ ດ້ວຍອຳນາດເຫລົ່ານີ້ ຈົ່ງຍິນດີແລະຮັກສາບັນຊີລາຍຊື່ຂອງທ່ານທີ່ມີຢູ່ໃນສວັນແລ້ວ.

5. ຄຳແນະນຳທີ່ພຣະເຢຊູຊົງເຕືອນຜູ້ປ່າວປະກາດທັງຫລາຍວ່າ:
   ປວງຊົນທົ່ວໂລກພ້ອມແລ້ວທີ່ຈະຮັບຟັງເຣື່ອງຂອງພຣະອົງ ຈົ່ງປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າເປັນວຽກທຳອິດການປ່າວປະກາດທີ່ໄດ້ຮັບຜົນດີທີ່ສຸດແມ່ນການວາງພື້ນຖານແຫ່ງຄວາມສັມພັນບໍ່ແມ່ນທຸກຄົນທີ່ຈະຮັບການປະກາດຂອງພຣະອົງ ບໍ່ແມ່ນທຸກຄົນທີ່ຕ້ອນຮັບເອົາພຣະອົງແລ້ວ ຈະໄດ້ເຂົ້າແຜ່ນດິນສວັນໂລດ ເພາະຄວາມດີແລະຊົ່ວຍັງແຍ່ງກັນຢູ່ພາຍໃນ.

__ຄຳໜູນໃຈສຳຫລັບວັນນີ້:__

6. ທ່ານຈະອະທິບາຍ " ຣາຊອານາຈັກຂອງພຣະເຈົ້າ " ຢ່າງໃດ?

7. ທ່ານເລີ້ມຕົ້ນໃນການປ່າວປະກາດຂອງທ່ານຢ່າງໃດ? ຖ້າທ່ານຢາກປະກາດ

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳຫລັບຄຣູສອນ
# ບົດຮຽນທີ 4
# ຈົ່ງສຳແດງພຣະຄຸນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 10:25-37

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 10: 25-37

**ຈຸດສຳຄັນຂອງບົດຮຽນນີ້:** ການຕິດຕາມພຣະເຢຊູ ຫມາຍຄວາມວ່າ ຕ້ອງຊ່ວຍເຫລືອຜູ້ອື່ນ ໂດຍບໍ່ຄຳນຶ່ງເຖິງວ່າເຂົາຈະເປັນໃຜ ແລະກໍບໍ່ຄຳນຶງເຖິງວ່າຈະຢູ່ໃນໂອກາດໃດ.

**ຄຳຖາມເພື່ອສຳຣວດ:** ມີໃຜແດ່ທີ່ຕ້ອງການ ການຊ່ວຍເຫລືອຈາກທ່ານ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະເຮັດໃຫ້ຮູ້ຢ່າງແທ້ຈິງວ່າ ຂ້າພະເຈົ້າຈະຂໍຢູ່ຢ່າງຜູ້ຕິດຕາມພຣະເຢຊູ ແລະຈະຊ່ວຍເຫລືອຕາມທີ່ພຣະເຢຊູຄຣິດໄດ້ຊົງສິດສອນໄວ້ນັ້ນ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ:

1. ໃຫ້ອີງໃສ່ເຣື່ອງແມ່ຕູ້ບຸນຍັງຫລົງທາງ ແລ້ວລາວກໍໂທຫາອາຈານຂອງລາວ ບອກວ່າຂ້ານ້ອຍຫລົງ ແລະກໍໄດ້ພົບແລ້ວ.

### ນຳພາສຶກສາພຣະຄັມພີ

2. ໃຫ້ຂຽນລົງໃນກະດານຕາມລຳດັບຕໍ່ໄປນີ້:
   - ❖ ຄຳຖາມຂອງທັມບັນດິດ (10:25-28)
   - ❖ ຄຳຍົກຕົວຢ່າງຂອງພຣະເຢຊູ (10:30-35)
     ປະໂລຫິດ, ຄົນເລວີ, ຄົນຊະມາເຣັຽ
   - ❖ ຄຳທ້າທາຍຂອງພຣະເຢຊູ (10:36-37)

3. ບອກກ່າວວ່າບົດຮຽນມື້ນີ້ ແມ່ນຈະກ່ຽວກັບຊີວິດອັນຕລອດໄປເປັນນິດ. ແນວຄິດນີ້ເປັນທີ່ຫນ້າສົນໃຈຫລາຍຂອງຊາວຢິວລຸ້ນເກົ່າ ເພາະວ່າພວກເຂົາຈະໄດ້ເຂົ້າໃຈພຣະເຈົ້າຢ່າງແທ້ຈິງ ແລະຊີວິດຫລັງຈາກຕາຍໄປແລ້ວ. ໃນການເລີ້ມຕົ້ນຂອງການສຶກສານີ້ ພວກເຮົາຈະເຫັນຄຳຕອບແລະຄຳຖາມຂອງພຣະເຢຊູ ທີ່ຖາມທັມບັນດິດ. ທັມບັນດິດກໍໃຫ້ຄຳຕອບຢ່າງລະອຽດ ແມ່ນເລັງເຖິງຊີວິດອັນຕລອດໄປເປັນນິດ. (10:27) ແລະໃນນີ້ກໍໄດ້ແບ່ງອອກເປັນ 2 ເປົ້າຫມາຍຄື (1)ໃຫ້ຮັກພຣະເຈົ້າດ້ວຍສຸດໃຈ ດ້ວຍສຸດຈິດດ້ວຍສຸດກຳລັງ ແລະດ້ວຍສຸດຄວາມຄິດ. (2) ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ. ຊຶ່ງໃນພຣະຄັມພີເດີມກໍໄດ້ພົບເຫມືອນກັນ ລະບຽບພວກເລວີ 19:18 ແລະ ສເລີຍພຣະບັນຍັດ 6:4-5 ເມື່ອພຣະເຢຊູບອກວ່າທ່ານເວົ້າມານັ້ນຖືກແລ້ວ. ທັມບັນດິດກໍຈີ້ພຣະເຢຊູທັນທີ ຄືວ່າແມ່ນຜູ້ໃດເປັນເພື່ອນບ້ານຂອງຂ້ານ້ອຍ?

4. ໃຫ້ເບິ່ງໃນກະດານທີ່ຂຽນໄວ້ແລ້ວ. ເມື່ອທັມບັນດິດຟັງແລ້ວກໍເຫັນວ່າມີຜົນສະທ້ອນເຖິງສັງຄົມທີ່ຊາວຢິວປະຕິບັດກັນມາ. ປະໂຣຫິດຜູ້ທີ່ຕາງໜ້າໃຫ້ກັບພຣະເຈົ້າ ແທນທີ່ຈະຊ່ວຍຄົນທີ່ມີຄວາມຕ້ອງການລາວຊ້ຳພັດກາຍໄປລ້າໆ. ຄົນເລວີກໍແມ່ນອີກຄົນນຶ່ງທີ່ຈຳເປັນຕ້ອງເບິ່ງເຖິງການຊ່ວຍເຫລືອໃນຄຣິສຕະຈັກແລະເປັນຄົນສຳຄັນໃນການຊ່ວຍເຫລືອ ລາວກໍກາຍໄປເຫມືອນກັນ. ຄົນສຸດທ້າຍແມ່ນຄົນທີ່ຊາວຢິວຖືວ່າເປັນຄົນມີແນວຄິດຕ່ຳ, ເປັນຄົນທີ່ຖືກສັງຄົມດູຖູກ, ເປັນຄົນຊາວຢິວກຽດຊັງທີ່ສຸດ, ແຕ່ຄົນນີ້ຊ້ຳພັດຢຸດເບິ່ງແລະໃຫ້ການຊ່ວຍເຫລືອ.

5. ພຣະເຢຊູຢຸດໜ້ອຍນຶ່ງແລ້ວກໍຖາມວ່າ (ລູກາ 10:36) ໃນສາມຄົນນີ້ທ່ານເຫັນວ່າຄົນໃດເປັນເພື່ອນບ້ານຂອງຄົນທີ່ຕົກຢູ່ໃນມືພວກປຸ້ນ? ທັມບັນດິດກໍຕອບແລ້ວພຣະເຢຊູກໍບອກວ່າ " ທ່ານຈົ່ງໄປເຮັດຢ່າງນັ້ນເຫມືອນກັນ" (10:37)

**<u>ຄຳໜູນໃຈສຳຫລັບວັນນີ້:</u>**

6. ຈົ່ງເນັ້ນໃຫ້ນັກຮຽນເຂົ້າໃຈວ່າບົດຮຽນນີ້ສອນໃຫ້ຮູ້ເຖິງຄວາມຮັກ. ຮັກແທ້ຕ້ອງມີການປະຕິບັດ. ອ່ານພຣະທັມຄັມພີມັດທາຍ 5:46-47

7. ໃຫ້ນັກຮຽນຕອບຄຳຖາມສຸດທ້າຍໃນເຈ້ຍບົດຮຽນທຸກຄົນ.

8. ຖ້າມີຄົນເມົາມາໂບດຂອງພວກເຮົາ ພວກເຂົາຕ້ອງການໆຊ່ວຍເຫລືອພວກເຮົາຈະທຳຢ່າງໃດ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນຳການສິດສອນ
# ບົດຮຽນທີ 5
# ອ້ອນວອນເໝືອນກັບພຣະອົງຊົງສັ່ງສອນ

---

**ຂໍ້ພຣະຄຳພີສຳລັບບົດຮຽນ:** ລູກາ 11:1-13

**ຂໍ້ພຣະຄຳພີສຳລັບເບື້ອງຫລັງ:** ລູກາ 11:1-13

**ຈຸດສຳຄັນຂອງບົດຮຽນນີ້:** ເດີນຕາມພຣະເຢຊູຫມາຍຄວາມວ່າ ໃຫ້ອ້ອນວອນຕາມທີ່ພຣະອົງສັ່ງສອນ.

**ຄຳຖາມເພື່ອການສຳຫລວດ:** ການອ້ອນວອນຂອງທ່ານກັບການອ້ອນວອນທີ່ພຣະເຢຊູຊົງສອນໃຫ້ສາວົກຂອງພຣະອົງນັ້ນເມື່ອສົມທຽບກັນແລ້ວເປັນຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ຕຶກຕອງແລະສົມທຽບການອ້ອນວອນຂອງຂ້າພະເຈົ້າ ແລະການອ້ອນວອນທີ່ພຣະເຢຊູຊົງສອນໃຫ້ສາວົກຂອງພຣະອົງ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ເລີ້ມຫ້ອງຮຽນໂດຍຖາມວ່າ ພວກເຂົາຈຳໄດ້ບໍ່ໃນຕອນເລີ້ມແລກຂອງການຮຽນອ້ອນວອນ ພວກເຂົາຮຽນອ້ອນວອນຢ່າງໃດແລະເມື່ອໃດ. ໃຫ້ຖາມອີກວ່າ ແມ່ນຜູ້ໃດເປັນຜູ້ຊ່ອຍພວກທ່ານໃຫ້ຈະເຣີນໃຫຍ່ຂຶ້ນໃນການອ້ອນວອນໃນຊີວິດຂອງທ່ານ? ຫລືວ່າທ່ານມີຄວາມຮູ້ສຶກວ່າ ການອ້ອນວອນນີ້ເປັນພາກສ່ວນນຶ່ງໃນຊີວິດຂອງທ່ານແລ້ວທ່ານຮູ້ຈັກການອ້ອນວອນນີ້ຕລອດມາ? ໃຫ້ສະມາຊິກຫ້ອງຮຽນນຳເຣື່ອງນີ້ມາສົນທະນາກັນວ່າ ເລີ້ມແຕ່ເວລາໃດທີ່ພວກເຂົ້າເລີ້ມເຂົ້າໃຈເຖິງຄວາມສຳຄັນຂອງການອ້ອນວອນອັນເປັນວິທີການຂອງການສົນທະນາກັບພຣະເຈົ້າ.

### ສຶກສາບົດຮຽນ

2. ໃຫ້ຂຽນຫົວຂໍ້ຂອງບົດຮຽນຂອງມື້ນີ້ຢູ່ເທິງກະດານ:
   ແບບຢ່າງຂອງການອ້ອນວອນ (11:1-4)
   ວິທີຂອງການອ້ອນວອນ (11:5-8)
   ຄວາມປະສົງຂອງການອ້ອນວອນ (11:9-13)

ແຕ່ລະຫົວຂໍ້ນັ້ນ ໃຫ້ຈົ່ງຍະວ່າງໄວ້ເພື່ອຈະໄດ້ຂຽນຄວາມຄິດເຫັນຫລືຂໍ້ຄວາມສຳຄັນລົງ

3. ໃນແຕ່ລະຫົວຂໍ້ຂອງບົດຮຽນ ໃຫ້ຫາຄົນນຶ່ງອ່ານຂໍ້ພຣະຄັມພີຂອງແຕ່ລະຫົວຂໍ້ນັ້ນ. ໃຫ້ຄົນນຶ່ງອ່ານພຣະທັມລູກາ 11:1-4. ໃຫ້ສະມາຊິກຫ້ອງວາດມະໂນພາບຂອງພຣະເຢຊູກຳລັງອ້ອນວອນ. ນັກແຕ້ມຫລາຍໆຄົນໄດ້ແຕ້ມຮູບຂອງພຣະເຢຊູໃນຄນະທີ່ພຣະອົງກຳລັງອ້ອນວອນຢູ່. ຮູບຂອງພຣະອົງທີ່ພວກເຂົາແຕ້ມອອກມານັ້ນ ແມ່ນຊີ້ໃຫ້ເຫັນຄວາມຄິດຂອງພວກນັກແຕ້ມ ຕ່າງຄົນຕ່າງມີພາບພົດໃນຂນະທີ່ພຣະອົງອ້ອນວອນຢູ່. ໃຫ້ແນະນຳສະມາຊິກໄປວ່າ ເມື່ອພວກສາວົກຂອງພຣະອົງເຫັນພຣະອົງອ້ອນວອນຢູ່ ພວກເຂົາມີຄວາມສົນໃຈ ພວກເຂົາຈຶ່ງມາຮ້ອງ

ຂໍໃຫ້ພຣະອົງສອນພວກເຂົາອ້ອນວອນ. ພຣະອົງຊົງບອກພວກເຂົາໃຫ້ເອີ້ນພຣະເຈົ້າວ່າ "ພຣະບິດາ" ຫລືວ່າ "ພໍ່." ພຣະອົງໃຊ້ຄໍາວ່າ "ພໍ່" ກໍເພື່ອຊ່ອຍໃຫ້ພວກສາວົກຂອງພຣະອົງເຂົ້າໃຈວ່າພຣະເຈົ້າຊົງເປັນຄວາມຮັກແລະພວກເຂົາສາມາດເຂົ້າຫາພຣະເຈົ້າໄດ້ທຸກເວລາ. ພວກສາວົກອາດຈະຄິດວ່າພຣະອົງອາດຈະໃຊ້ຄໍາທີ່ເປັນການຍົກຍ້ອງພຣະເຈົ້າ ເຊັ່ນຄໍາວ່າ <u>ພຣະຜູ້ຊົງສ້າງ</u> ຫລືວ່າ <u>ພຣະເຈົ້າອົງບໍຣິສຸດ</u> ແຕ່ພຣະອົງຢາກໃຫ້ພວກເຂົາ (ພວກເຮົາດ້ວຍ) ຮູ້ວ່າ ພວກເຮົາເປັນພາກສ່ວນໃນຄອບຄົວຂອງພຣະເຈົ້າ ແລະໃນຖານະເປັນລູກຂອງພຣະອົງພວກເຮົາຈຶ່ງເຂົ້າເຝົ້າພຣະອົງແລະທູນຂໍໃນສິ່ງພວກເຮົາຕ້ອງການ.

4. ຊີ້ບອກໃຫ້ສະມາຊິກຫ້ອງຮຽນເຫັນວ່າໃນຄໍາອ້ອນວອນນີ້ປະກອບດ້ວຍຄໍາຮ້ອງຂໍຢູ່ຫ້າປະການ. ໃຫ້ພວກເຂົາບອກມາໃນຄໍາຮ້ອງຂໍຂອງຫ້າປະການ. ຊີ້ໃຫ້ພວກເຂົາເຫັນສອງປະການແລກແມ່ນກ່ຽວພັນກັບພຣະເຈົ້າ ແລະສາມປະການຕໍ່ມານັ້ນ ແມ່ນກ່ຽວກັບຕົວເອງແລະຄົນອື່ນ. ສໍາລັບປະການທີ່ກ່ຽວກັບພຣະເຈົ້າ ພຣະເຢຊູຢາກໃຫ້ພວກເຮົາຈໍາໄວ້ວ່າ ພຣະເຈົ້າຊົງບໍຣິສຸດແລະເມື່ອຮ້ອງຫາພຣະເຈົ້າຈະຕ້ອງຖວາຍກຽດພຣະອົງວ່າ "ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄຣົບບູຊາ." ຕໍ່ມາພຣະອົງໃຫ້ພວກເຮົາອ້ອນວອນວ່າ "ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່" ເພື່ອໃຫ້ພວກເຮົາລະນຶກຢູ່ສເມີວ່າພຣະເຈົ້າຊົງເປັນຜູ້ປົກຄອງເຫນືອສັບປະທຸກສິ່ງຕັ້ງແຕ່ໃດມາ. ການອ້ອນວອນຂອງພວກເຮົາຈະຕ້ອງຈໍາໄວ້ສເມີວ່າ ພຣະເຈົ້າຊົງຄຸ້ມຄອງຢູ່. ສາມປະການຕໍ່ມານັ້ນ ແມ່ນກ່ຽວກັບຄວາມຕ້ອງການຂອງຕົວເອງ. ປະການທີສາມເຕືອນໃຫ້ພວກເຮົາໄວ້ວ່າຊີວິດຂອງພວກເຮົາແຕ່ລະວັນແມ່ນເພິ່ງພຣະເຈົ້າຢູ່. ປະການທີສີ່ ພຣະອົງເຕືອນພວກເຮົາວ່າເພາະວ່າຄວາມບາບຂອງພວກເຮົາໆຈຶ່ງຕ້ອງອ້ອນວອນຂໍໃຫ້ພຣະເຈົ້າອະພັຍ. ປະການສຸດທ້າຍ ພວກເຮົາຈະຕ້ອງອ້ອນວອນໃຫ້ພຣະເຈົ້າຊ່ອຍໃຫ້ພວກເຮົາເອົາຊະນະຄວາມບາບໃນຊີວິດຂອງພວກເຮົາ. ການອ້ອນວອນຢ່າງນີ້ຈະຊ່ອຍປົກປ້ອງພວກເຮົາຕໍ່ສູ້ກັບອໍານາດຂອງມານທີ່ຈະນໍາພວກເຮົາໄປໃນທາງຜິດ.

5. ໃຫ້ຜູ້ນຶ່ງອ່ານພຣະທັມລູກາ 11:5-8. ຫລັງຈາກນັ້ນ ໃຫ້ຜູ້ນຶ່ງເລົ່າເຣື່ອງຄໍາອຸປມາໃນພຣະທັມຕອນນີ້ດ້ວຍຄໍາເວົ້າຂອງລາວເອງແທນທີ່ຈະອ່ານຈາກພຣະຄັມພີ. ໃຫ້ເນັ້ນວ່າ ຄໍາອຸປມາໃນຕອນບໍ່ໄດ້ສົມທຽບພຣະເຈົ້າເປັນເຫມືອນກັບເພື່ອນຜູ້ທີ່ຝືນໃຈ. ເຣື່ອງລາວໃນຕອນນີ້ແມ່ນເນັ້ນເຖິງ "ຄວາມກ້າ" "boldness" ໃນການອ້ອນວອນ.

ຈຸດປະສົງ

ຂອງຄໍາອຸປມາໃນເຣື່ອງນີ້ບໍ່ໄດ້ສອນວ່າ ພຣະເຈົ້າຈະຕອບຄໍາອ້ອນວອນຂອງພວກເຮົາ ຖ້າພວກເຮົາຫາກຈົ່ມແຕ່ຄວາມເກົ່າຢູ່ເລື້ອຍໆ. ແຕ່ຄວາມຫມາຍຂອງຄໍາອຸປມານັ້ນແມ່ນວ່າ ຖ້າເຈົ້າຂອງເຮືອນຜູ້ນີ້ລຸກຂຶ້ນມາໃນເວລາເດິກດື່ນທ່ຽງຄືນເພື່ອຊ່ອຍເພື່ອນຂອງລາວ ພຣະເຈົ້າຂອງພວກເຮົາແທ້ງຈະຊ່ອຍພວກເຮົາໃນເມື່ອພວກເຮົາຫາກມີຄວາມກ້າເຂົ້າໄປຮ້ອງຂໍຕໍ່ພຣະອົງໃນສິ່ງທີ່ພວກເຮົາຕ້ອງການ.

6. ໃຫ້ຜູ້ນຶ່ງອ່ານພຣະທັມລູກາ 11:9-13. ໃຫ້ເນັ້ນວ່າພຣະທັມຕອນນີ້ໄດ້ຮັບຮອງວ່າ ພຣະເຈົ້າຈະຕອບຄໍາອ້ອນວອນຂອງພວກເຮົາ. ໃຫ້ສັງເກດໄວ້ວ່າ ພຣະເຢຊູບໍ່ໄດ້ເວົ້າວ່າພຣະເຈົ້າຈະໃຫ້ທຸກສິ່ງທີ່ພວກເຮົາຂໍ ແຕ່ພຣະອົງຈະຕອບສນອງຜູ້ທີ່ມີຈິດໃຈທີ່ບໍ່ລະເລີຍໃນການອ້ອນວອນ. ພຣະທັມຕອນນີ້ໄດ້ໃຫ້ຄວາມຫມັ້ນໃຈວ່າ ພຣະບິດາເຈົ້າຜູ້ຊົງສະຖິດຢູ່ເທິງສວັນຂອງພວກເຮົາ ພຣະອົງຈະປະທານທຸກສິ່ງທີ່ພວກເຮົາຕ້ອງການ ເພື່ອໃຫ້ຊີວິດນີ້ເຕັມລົ້ນແລະເປັນຊີວິດທີ່ເກີດດອກອອກຜົນ. ພຣະອົງຈະບໍ່ເອົາງູຫລືແມງງອດຊຶ່ງເປັນສັດທີ່ມີພິດພັຍໃຫ້ພວກເຮົາດອກ ແຕ່ພຣະອົງຈະເອົາແຕ່ສິ່ງດີໆໃຫ້ພວກເຮົາ. ສະນັ້ນແຫລະ ພໍ່ແມ່ຜູ້ທີ່ເປັນມະນຸດຍັງຮູ້ຈັກເອົາແຕ່ຂອງດີໃຫ້ລູກ ຫລາຍໄປກວ່ານັ້ນອີກ ພຣະເຈົ້າຈະເອົາແຕ່ຂອງດີງມາໃຫ້ລູກຂອງພຣະອົງ.

<u>ຫມູນໃຊ້ໃນການກະທໍາ</u>

໗. ໃຫ້ເຕືອນສະມາຊິກຫ້ອງວ່າ ການອ້ອນວອນຈະຕ້ອງມີລັກສະນະຢ່າງນີ້:

ກ. ມີຈິດໃຈບໍ່ລະເລີຍ (ບໍ່ລົດລະ)

ຂ. ຖ່ອມຕົວ

ຄ. ອ້ອນວອນແບບທັມດາ

ງ. ໃຫ້ເຝົ້າຣະວັງ

ຈ. ໃຫ້ມີການກາງຕໍ່ວ່າຈະໄດ້ຮັບຄຳຕອບ (ໃຫ້ມີຄວາມຫວັງວ່າຈະໄດ້ຮັບ)

ສ. ໃຫ້ເປັນໃຈນຶ່ງໃຈດຽວກັນກັບຜູ້ທີ່ຮັບເຊື່ອຄົນອື່ນໆ

ໃຫ້ສະມາຊິກຫ້ອງຊັ່ງຊາເບິ່ງຊີວິດຂອງການອ້ອນວອນຂອງພວກເຂົາຕາມລັກສະນະຂອງການອ້ອນວອນຂັ້ງເທິງນີ້.

8. ໜູນໃຈໃຫ້ສະມາຊິກຫ້ອງຢຶດເອົາພາກປະຕິບັດຫ້າຢ່າງນີ້ໄວ້ໃນໃຈແລະນຳມາໃຊ້ໃນຊີວິດທຸກໆວັນ:

ກ. ໃຫ້ແຍກເອົາເວລາເພື່ອອ້ອນວອນ

ຂ. ເລີ້ມການອ້ອນວອນດ້ວຍການອ່ານພຣະທັມເພງສັຣເສີນ

ຄ. ໃຫ້ນຳຄຳຮ້ອງຂໍຫ້າປະການມາໃນການອ້ອນວອນແຕ່ລະມື້

ງ. ໃຫ້ເຮັດລາຍການຊື່ຂອງຜູ້ທີ່ຈະອ້ອນວອນເພື່ອ

ຈ. ໃຫ້ອ້ອນວອນທຸກໆວັນບໍ່ຂາດ

ໃຫ້ພວກເຂົານຳໄປປະຕິບັດໃນວັນຕໍ່ໄປແລະໃຫ້ພວກເຂົາມາລາຍງານເຖິງຜົນຮັບໃນອາທິດຈະມານີ້ ເມື່ອພວກເຂົາໄດ້ນຳໄປປະຕິບັດແລ້ວ ພວກເຂົາຮູ້ສຶກວ່າພວກເຂົາມີຄວາມໃກ້ຊິດກັບພຣະເຈົ້າຫລາຍກວ່າເກົ່າຢ່າງໃດ ແລະອ້ອນວອນຫລາຍກວ່າເກົ່າເໝືອນກັບພຣະເຢຊູໄດ້ສອນພວກເຮົາ.

*ສຈ. ບຸນເຮັ່ງ ພົງປພຣະພັນ*

# <u>ບົດແນະນຳການສິດສອນ</u>
# <u>ບົດຮຽນທີ 6</u>
# <u>ຈົ່ງໄວ້ວາງໃຈໃນພຣະເຈົ້າແລະບໍ່ຕ້ອງຢ້ານ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u>** ລູກາ 12:1-12

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ລູກາ 11:53-12:12

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຜູ້ທີ່ຕິດຕາມພຣະເຢຊູຈະຕ້ອງໄວ້ວາງໃຈໃນພຣະເຈົ້າເມື່ອພວກເຂົາປະເຊີນກັບສິ່ງກີດກັ້ນແທນທີ່ຈະເກີດຄວາມຢ້ານກົວ.

**<u>ຄຳຖາມເພື່ອການສຳຫລວດ:</u>** ໃນເວລາໃດທີ່ທ່ານພົບວ່າເປັນການຍາກທີ່ຈະໄວ້ວາງໃຈໃນພຣະເຈົ້າ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະຊອກຫາທາງຊ່ອຍໃຫ້ທ່ານເພີ້ມຄວາມໄວ້ວາງໃຈໃນພຣະເຈົ້າໃຫ້ຫລາຍຂຶ້ນໃນຂນະທີ່ທ່ານປະເຊີນກັບສິ່ງກີດກັ້ນແລະຄວາມລຳບາກ.

## <u>ແຜນການສິດສອນ</u>

### <u>ຊີວິດສະພາບຕົວຈິງ</u>

1. ນຳພາສະມາຊິກຫ້ອງໃຫ້ຫາຄຳໃດທີ່ມີການພົວພັນກັບຂໍ້ຄວາມຕໍ່ໄປນີ້: "ການເດີນທາງ" ແລະຕອບໃຫ້ໝູ່ໃນຫ້ອງຟັງນຳກັນ.

2. ແນະນຳໃຫ້ສະມາຊິກຫ້ອງຮູ້ວ່າພຣະຄັມພີທີ່ຈະຮຽນໃນວັນນີ້ ແມ່ນຢູ່ໃນລະຫວ່າງກາງຂອງເຣື່ອງລາວຂອງການເດີນທາງຂອງພຣະເຢຊູ. ລູກາ 9:51-19:27 ແມ່ນເຣື່ອງລາວການເດີນທາງຂອງພຣະອົງໄປເຢຣູຊາເລັມແລະໄປສູ່ໄມ້ກາງແຂນ. ໃນຫ້າບົດຮຽນນີ້ ບົດທີ 6-10 ມີຫົວຂໍ້ວ່າ "ຂໍ້ແນະນຳສຳລັບສາວົກໃນໂລກຢ່າງນີ້".

### <u>ສຶກສາບົດຮຽນ</u>

3. ໃຫ້ສັງເກດການເມື່ອພວກເຮົາເຂົ້າມາໃນບົດຮຽນຂອງມື້ນີ້ ໃນບົດທີ 11 ພຣະເຢຊູຊົງໄລ່ຜີ, ສັ່ງສອນເຣື່ອງຄວາມສະວ່າງ ແລະຮັບປະທານອາຫານຢູ່ເຮືອນຂອງຟາຣີຊາຍ. ເຖິງຢ່າງໃດກໍຕາມ ພຣະອົງໄດ້ເຮັດໃຫ້ພວກຟາຣີຊາຍແລະພວກນັກທັມໃຈຮ້າຍຢູ່ແລ້ວ ໂດຍເອີ້ນພວກເຂົາວ່າເປັນຄົນໜ້າຊື່ໃຈຄົດ.

4. ໃຫ້ຂຽນຄຳວ່າ "ຈາກຮ້າຍໄປເຖິງຮ້າຍທີ່ສຸດ". ໃຫ້ອ່ານ ລູກາ 11:53.

5. ໃຫ້ຖາມວ່າ, <u>ຈາກການສັງເກດການຂອງມະນຸດແລ້ວ, ແມ່ນຫຍັງທີ່ເປັນເຫດການຮ້າຍໃນກໍຣະນີຂອງພຣະເຢຊູ? ແມ່ນຂໍ້ຄວາມໃດທີ່ຊີ້ໃຫ້ເຫັນ?</u> ໃຫ້ຕື່ມໄປອີກວ່າເຫດການຮ້າຍທີ່ສຸດນັ້ນແມ່ນສັດຕຣູຂອງພຣະອົງນັ້ນ ພາຍນອກແລ້ວເບິ່ງກັບວ່າພວກເຂົາມີອຳນາດ ເປັນຄົນດີ ເປັນຜູ້ນຳທີ່ຖືຮັກສາສິນ.

6. ອ່ານພຣະທັມລູກາບົດທີ 12:1-3 ພ້ອມໆກັນ. ສັງເກດເບິ່ງແມ ຜູ້ທີ່ຟັງພຣະອົງນັ້ນແມ່ນສາວົກຂອງພຣະອົງ. ຖາມ

ສະມາຊິກຫ້ອງວ່າ, ໃນຈໍານວນຝູງຊົນທີ່ຕິດຕາມມານີ້ ມີພວກຟາຣີຊາຍຢູ່ໃນຖ້າມກາງພວກເຂົາບໍ່ທີ່ໄດ້ຍິນຄໍາແນະນໍາຂອງພຣະອົງ? ຖ້າທ່ານເປັນສາວົກຂອງພຣະອົງໃນຂະນະນັ້ນ ແລະໄດ້ຍິນຄໍາເຕືອນກ່ຽວກັບພວກຟາຣີຊາຍ ທ່ານຈະມີຄວາມຮູ້ສຶກຢ່າງໃດ?

7. ຖາມສະມາຊິກຫ້ອງວ່າເປັນຫຍັງຄວາມໜ້າຊື່ໃຈຄົດຂອງຄົນມີສາສນາຈຶ່ງເປັນໜ້າຢ້ານ? ຄໍາຕອບທີ່ເປັນໄປໄດ້
- ມັນສາມາດເຮັດໃຫ້ພິນາດໄດ້.
- ມັນສາມາດເຮັດໃຫ້ຄົນອື່ນບໍ່ມີກໍາລັງໃຈຈະມາຮູ້ຄວາມຈິງຂອງພຣະເຈົ້າໄດ້.

8. ອ່ານຂໍ້ທີ 3 ອີກເທື່ອນຶ່ງ. ບອກໃຫ້ສະມາຊິກຫ້ອງວາດມະໂນພາບເບິ່ງວ່າ ມີຄົນຜູ້ນຶ່ງຢືນຢູ່ເທິງຫລັງຄາເຮືອນແລະຮ້ອງປ່າວບ້ານປ່າວເມືອງວ່າ "ຣັຖບານບໍ່ຮູ້ຫຍັງຈັກເທື່ອ" ຫລື "ຂ້ອຍມັກອ່ານໜັງສືລາມົກ" ຫລື "ມ່ວນຫລາຍໃນການຕິຕຽນຄົນຂ້າງບ້ານເຮືອນຄຽງ". ຖາມວ່າ ພວກເຮົາຄວນຢ້ານຄວາມໜ້າຊື່ໃຈຄົດຂອງຟາຣີຊາຍທີ່ເກີດຂຶ້ນໃນຕົວຂອງພວກເຮົາເອງຫລືບໍ່?

9. ອ່ານຂໍ້ທີ 4-7. ໃຫ້ສັງເກດເບິ່ງຄວາມຮັກທີ່ພຣະອົງສະແດງອອກໃຫ້ກັບສາວົກຂອງພຣະອົງ. ພຣະອົງເຫັນໝົດ ແລະພຣະອົງເຫັນວ່າພວກເຮົານັ້ນມີຄຸນຄ່າໝົດທຸກຄົນແລະພຣະອົງສັນຍາວ່າຈະຢືນຄຽງບ່າຄຽງໄລ່ກັບພວກເຮົາ ໃນຂະນະທີ່ພວກເຮົາຢືນຢັດເພື່ອພຣະອົງ.

10. ຖາມສະມາຊິກຫ້ອງເບິ່ງວ່າ ມີບໍ່ວ່າ ຢ້ານໃນສິ່ງທີ່ຄວນຢ້ານແລະບໍ່ຄວນຢ້ານໃນສິ່ງທີ່ບໍ່ຄວນຢ້ານ?

11. ອ່ານຂໍ້ທີ 8-10. ໃຫ້ຮັບຮູ້ໄວ້ວ່າຂໍ້ຄວາມສໍາຄັນສອງຂໍ້ນັ້ນອາດຈະເຂົ້າໃຈຍາກ. ໃຫ້ແບ່ງຫ້ອງອອກເປັນສອງກຸ່ມ ກຸ່ມນຶ່ງໃຫ້ໄປຄົ້ນຄົ້ວຄໍາວ່າ "ບຸດມະນຸດ" ແລະອີກກຸ່ມນຶ່ງໃຫ້ໄປສຶກສາຄໍາວ່າ "ການໝິ່ນປມາດຕໍ່ພຣະວິນຍານບໍຣິສຸດ" ໃຫ້ເບິ່ງໃນຄູ່ມືຂອງສະມາຊິກຫ້ອງໃນຫົວຂໍ້ " ພຣະເຢຊູຊົງກ່າວເຖິງຄວາມໜ້າຊື່ໃຈຄົດເປັນການຕໍ່ສູ້ພຣະວິນຍານບໍຣິສຸດ".

## ບຸດມະນຸດ

ໃນຂະນະທີ່ພຣະເຢຊູຊົງຂຶ້ນມາຈາກການຮັບບັບຕິສະມາແລະໃນຕອນທີ່ພຣະອົງປ່ຽນພຣະລັກສະນະ ພຣະເຈົ້າໄດ້ເອີ້ນພຣະອົງວ່າ "ທ່ານຜູ້ນີ້ແຫລະ ເປັນບຸດຂອງເຮົາ" (ລູກາ 3:22; ໃຫ້ອ່ານເບິ່ງ 9:35). ໂຢຮັນໄດ້ບັນທຶກໄວ້ວ່າ ພຣະເຈົ້າ "ປະທານພຣະບຸດອົງດຽວ" (ໂຢຮັນ 3:16).

ພຣະເຢຊູເອີ້ນພຣະອົງເອງວ່າ "ບຸດມະນຸດ" (ລູກາ 5:24; 6:5, 22; 7:34; 9:22, 26,44, 58; 11:30; 12:8, 10, 40; 17:22, 24, 26, 30; 18:8, 31; 19:10; 21:27, 36; 22:22, 48, 69; 24:7).

ໃນຖານະເປັນ "ບຸດມະນຸດ" ພຣະເຢຊູຮັບເອົາສະພາບຂອງມະນຸດໃນຂະນະດຽວກັນພຣະອົງຊົງເປັນພຣະເຈົ້າ(ຟີລິບປອຍ 2:6-8).

ໃນນິມິດຂອງດານີເອນ ຄໍາວ່າ "ບຸດມະນຸດ" ແມ່ນອ້າງອີງໃສ່ພຣະເມຊີອາ ແລະການກັບມາຄັ້ງທີສອງ (ດານີເອນ 7:13). ການກັບມາຂອງພຣະເຢຊູຈະເປັນເຫມືອນກັບນິມິດຂອງດານີເອນ ເມື່ອພຣະອົງກ່າວຕໍ່ກາຢະຟາ ມະຫາ

ປະໂຣຫິດວ່າ ພຣະອົງຈະປາກົດຢູ່ໃນເມກ ພຣະອົງຈະນັ່ງຢູ່ຂ້າງຂວາຂອງພຣະເຈົ້າ (ມາຣະໂກ 14:62).

12. ໃຫ້ສົມທຽບຂໍ້ທີ 8-10 ກັບຂໍ້ທີ 22:54-62 ການບັນທຶກເຣື່ອງເປໂຕປະຕິເສດພຣະອົງ.

13. ອ່ານບົດທີ 12:11-12. ໃຫ້ຖາມວ່າ:
- ສາວົກຂອງພຣະອົງຢ້ານອັນໃດ?
- ຜູ້ທີ່ຕິດຕາມພຣະອົງຢ້ານອັນໃດແດ່ໃນສມັຍນີ້?
- ທ່ານຈະພົບຄວາມໝັ້ນໃຈອັນໃດແດ່ ໃນຄຳວ່າ "ໃນໂມງນັ້ນ"?
- ຈະຕ້ອງຈັດຕຽມຕົນປານໃດຈຶ່ງຈະເປັນພຍານເພື່ອພຣະຄຣິດໄດ້?

<u>**ໝູນໃຊ້ໃນການກະທຳ**</u>

14. ຖາມສະມາຊິກຫ້ອງດ້ວຍຄຳຖາມດັ່ງຕໍ່ໄປນີ້:
- ທ່ານພົບວ່າຍາມໃດເປັນການງ່າຍທີ່ຈະໄວ້ວາງໃຈພຣະເຈົ້າແລະບໍ່ມີຄວາມຢ້ານກົວຫຍັງເລີຍ?
- ທ່ານພົບວ່າຍາມໃດເປັນການຍາກທີ່ຈະໄວ້ວາງໃຈພຣະເຈົ້າແລະມີຄວາມຢ້ານກົວຢູ່ທຸກດ້ານ?
- ທ່ານໄດ້ນຳພຣະສັນຍາຂອງພຣະເຢຊູມາປະກອບກັບຊີວິດຂອງທ່ານແລະເປັນພຍານເພື່ອພຣະອົງວິທີໃດ?

*ສຈ. ບຸນເຮັ່ງ ພັງປຣະພັນ*

# ບົດແນະນຳການສິດສອນ

## ບົດຮຽນທີ 7

## ຈົ່ງເຝົ້າລະວັງຢູ່

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ລູກາ 12:35-48

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ລູກາ 12:35-53

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ທີ່ຕິດຕາມພຣະເຢຊູຈະຕ້ອງເຝົ້າລະວັງຢູ່ແລະສັດຊື່ຕໍ່ພຣະຄຣິດ ພວກເຂົາຮູ້ວ່າຈະຕ້ອງໃຫ້ການຕໍ່ພຣະເຈົ້າ.

**ຄຳຖາມເພື່ອການສຳຣວດ:** ທ່ານຮູ້ເມື່ອຢູ່ບໍ່ ຫລື ທ່ານຍ່າງຫລັບທາງຍືນໃນຊີວິດຂອງທ່ານ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊັ່ງຊາເບິ່ງວ່າຂ້າພະເຈົ້າໄດ້ໃຊ້ຊີວິດຢ່າງເຖິງຖອງ ເພື່ອຈະໃຫ້ການຕໍ່ພຣະເຈົ້າ.

### ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຂຽນ ປີ 2000 "Y2K" ຢູ່ເທິງກະດານ. ໃຫ້ຖາມສະມາຊິກເບິ່ງວ່າມີຜູ້ໃດຈຳໄດ້ບໍ່. ຕໍ່ມາໃຫ້ຖາມວ່າ, ປະຊາຊົນເຮັດອັນໃດແດ່ເພື່ອຈັດຕຽມຮັບເຫດການປີ 2000? ທ່ານຈຳໄດ້ບໍ່ວ່າພວກເຂົາເວົ້າກັນດ້ວຍຄວາມຕື່ນເຕັ້ນ ຫລືວ່າດ້ວຍຄວາມຢ້ານ?

2. ໃຫ້ຂຽນ "ການກັບມາຄັ້ງທີສອງຂອງພຣະເຢຊູ" ຢູ່ເທິງກະດານ. ໃຫ້ຖາມວ່າ, ເມື່ອທຽບກັບເຫດການປີ 2000 ແລ້ວ ປະຊາຊົນມີຄວາມຮູ້ສຶກຢ່າງໃດກັບເຫດການທີ່ຈະເກີດຂຶ້ນນີ້? ພວກເຂົາໄດ້ຕຽມພ້ອມບໍ່? ພວກເຮົາເອງໄດ້ຕຽມພ້ອມບໍ່? ພວກເຮົາດຳເນີນຊີວິດເຫມືອນກັນກັບໃນເຫດການປີ 2000 ນັ້ນຫລືບໍ່?

### ສຶກສາບົດຮຽນ

3. ໃຫ້ເວົ້າຢ່າງນີ້, ນັກຮຽນໄດ້ຮັບການບ້ານຈາກຄຣູຂອງພວກເຂົາ, ຄົນງານໄດ້ຮັບວຽກຈາກຫົວຫນ້າງານ, ທະຫານໄດ້ຮັບຄຳສັ່ງຈາກນາຍ. ຕໍ່ຈາກນັ້ນ ນັກຮຽນ, ຄົນງານ, ແລະທະຫານຕ່າງຄົນຈະຕ້ອງລາຍງານຫລືວ່າໃຫ້ການຕາມທີ່ໄດ້ຮັບມອບຫມາຍ. ໃນພຣະທັມລູກາ 12:35-48, ພວກສາວົກຂອງພຣະເຢຊູກໍໄດ້ຮັບມອບຫມາຍຈາກພຣະອົງ. ພຣະອົງໄດ້ກ່າວເປັນຄຳອຸປມາເພື່ອໃຫ້ພວກເຮົາເຂົ້າໃຈຫນ້າທີ່ການມອບຫມາຍຂອງພຣະອົງ.

4. ເລີ້ມແຕ່ຂໍ້ 5-7 ຫລັງຈາກອ່ານຂໍ້ພຣະຄັມພີແລ້ວ ໃຫ້ຕັ້ງຄຳຖາມຕາມຂໍ້ຄຳຖາມທີ່ໄດ້ແນະນຳໄປນັ້ນ ແລະຊອກຫາຄຳຕອບຫລືຄຳສົນທະນາຈາກຄູ່ມືບົດຮຽນຂອງສະມາຊິກຫ້ອງ.

5. ໃຫ້ອ່ານຂໍ້ທີ 35-38.
   - ການຫນຸ່ງຖືຂອງຄົນຢິວໄດ້ແນະນຳໄປແລ້ວ. "ທ່ານທັງຫລາຍຈົ່ງຮັດແອວໄວ້" ແມ່ນໃຫ້ເຮັດຢ່າງໃດ?
   - ເປັນຫຍັງຜູ້ເປັນນາຍຈຶ່ງຕ້ອງການໃຫ້ຂ້ອຍໃຊ້ນັ້ນໄຕ້ໂຄມໄວ້? ໂຄມໄຟມີຄວາມສຳຄັນຫລາຍປານໃດ?

ນາຍຈະໃຫ້ຣາງວັນແກ່ຂ້ອຍໃຊ້ຢ່າງໃດ?

6. ໃຫ້ອ່ານຂໍ້ທີ 39-40.
   - ຂໍ້ທີ່ 39 ມີຄວາມໝາຍຢ່າງໃດ?
   - ອ້າງອີງຕາມຂໍ້ທີ 40 ເວລາການກັບມາຂອງບຸດມະນຸດນັ້ນບໍ່ໄດ້ບອກໄວ້ ເພື່ອຄວາມແນ່ນອນພວກເຮົາຈະເຮັດຢ່າງ?

7. ໃຫ້ອ່ານຂໍ້ທີ 41-48.
   - ຂ້ອຍໃຊ້ປະເພດໃດທີ່ພຣະເຈົ້າເຫັນພ້ອມ?
   - ຂ້ອຍໃຊ້ປະເພດໃດທີ່ຈະຖືກລົງໂທດ?
   - ສຳລັບຂ້ອຍໃຊ້ທີ່ບໍ່ຮູ້ຈັກໃຈນາຍເດຈະເຮັດຢ່າງໃດກັບພວກເຂົາ?

8. ໃຫ້ຂໍ້ພຣະຄັມພີແກ່ສະມາຊິກຫ້ອງອ່ານ: 1 ເທຊະໂລນີກ 3:13; 2 ເປໂຕ 3:8-14; ມັດທາຍ 24:36. ໃຫ້ຖາມວ່າ, ພວກເຮົາຮຽນຮູ້ອັນໃດເພີ້ມແດ່ກ່ຽວກັບການເຝົ້າລະວັງໃນຂະນະການຄອງຄອຍການກັບມາຂອງພຣະຄຣິດຈາກພຣະຄັມພີທີ່ໄດ້ອ່ານໄປນັ້ນ? ຕໍ່ມາໃຫ້ພວກເຂົາຕອບ.

<u>ໝູນໃຊ້ໃນການກະທຳ</u>

9. ຄອບຄົວຂອງ ໂຄຣີ ເທັນ ບູມ (Corrie ten Boom) ໄດ້ຊຸກເຊື່ອງຊາວຢິວໄວ້ໃນເຮືອນຂອງພວກເຂົາຈາກທະຫານນາຊີ (Nazi of Germany) ຂອງເຢຍຣະມັນທີ່ໄດ້ເຂົ້າຍຶດປະເທດ ເນເຕີແລນ (Netherlands). ໃນຂະນະທີ່ຢູ່ໃນສູນກັກຂັງ ເອື້ອຍ, ພໍ່, ແລະຫລານຂອງລາວໄດ້ເສັຽຊີວິດ. ສ່ວນລາວນັ້ນລອດມາໄດ້ຈົນເຖົ້າແກ່ ລາວເດີນທາງໄປທົ່ວໂລກເລົ່າເຣື່ອງປະສົບການຊີວິດທີ່ໄດ້ຮັບຄວາມທຸກລຳບາກຢູ່ໃນສູນກັກຂັງ ແລະເວົ້າເຣື່ອງຄວາມຮັກຂອງພຣະເຢຊູເພື່ອນຳຄົນໃຫ້ມາຮັບເຊື່ອພຣະເຈົ້າ. ຢູ່ທີ່ມະຫາວິທະຍາລັຍ ດາລັດ ແບັບຕິດ ມີຮູບຂອງລາວໄວ້ເປັນທີ່ລະນຶກແລະຢູ່ກ້ອງຮູບນັ້ນມີຄຳຂວັນຂອງລາວໄດ້ຂຽນໄວ້ວ່າ "ຂ້າພະເຈົ້າມັກບອກໃຫ້ຝູງຊົນວ່າ, "ໃຫ້ຫລຽວຂຶ້ນໄປເທິງທ້ອງຟ້າແລະວາດມະໂນພາບເບິ່ງການສະແດງອອກຂອງໃບໜ້າຂອງເຈົ້າ ເມື່ອເຈົ້າເຫັນພຣະເຢຊູຢືນຢູ່ເທິງກ້ອນເມກກຳລັງສະເດັດລົງມາຈາກສວັນ. ພຣະອົງຈະກັບມາໃນບໍ່ຊ້າ. ທ່ານພ້ອມແລະບໍ່?"

ວັນນຶ່ງໃນປີ 1983, ໂຄຣີ ໄດ້ຈາກໂລກນີ້ໄປຮວມອາຍຸໄດ້ 91 ປີ, ພຣະຄຣິດໄດ້ນຳລາວກັບມາຢູ່ນຳພຣະອົງ. ພຣະອົງຈະກັບມາຮັບເອົາພວກເຮົາໝົດທຸກຄົນ: ຈະຜ່ານທາງຄວາມຕາຍ ເຫມືອນກັບ ໂຄຣີ ຫລືການກັບມາຄັ້ງທີສອງຕາມທີ່ພຣະອົງຊົງສັນຍາໄວ້. ການກັບມາຂອງພຣະອົງນັ້ນແນ່ນອນ. ພວກເຮົາຈະສັດຊື່ໃນການເປັນພຍານປະກາດເຣື່ອງລາວຂ່າວປະເສີດ ເຫມືອນດັ່ງ ໂຄຣີ ຕາບໃດທີ່ພຣະອົງຍັງໃຫ້ໂອກາດພວກເຮົາບໍ່? ພວກເຮົາຈະເງີຍໜ້າຂຶ້ນຟ້າເຝົ້າເບິ່ງການກັບມາຂອງພຣະອົງເຫມືອນດັ່ງໂຄຣີບໍ່?

## ຄຳແນະນຳສຳລັບຄຣູສອນ

## ບົດຮຽນທີ 8

## ເນັ້ນໃນສິ່ງທີ່ສຳຄັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 13:10-17

**ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:** ລູກາ 13:10-17

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຕິດຕາມພຣະເຢຊູຈະຕ້ອງເນັ້ນເຣື່ອງການຊ່ວຍເຫລືອຄົນ, ບໍ່ແມ່ນເຣື່ອງຮັກສາກົດ, ເຖິງວ່າການເຮັດສິ່ງນັ້ນຈະຖືກຕໍ່ຕ້ານ.

**ຄຳຖາມເພື່ອການສຳຣວດ:** ເວລາໃດທີ່ການຊ່ວຍເຫລືອຄົນສຳຄັນກວ່າການຮັກສາກົດທາງສາສນາ ແລະກົດທາງວັທນະທັມ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວ່າກົດທາງສາສນາ ແລະກົດທາງວັທນະທັມອັນໃດແດ່ທີ່ກີດກັ້ນບໍ່ໃຫ້ຂ້ອຍຊ່ວຍເຫລືອຄົນ.

### ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ອ່ານຂໍ້ຄວາມຕໍ່ໄປນີ້ ແລ້ວບອກນັກຮຽນໃຫ້ເລືອກວ່າຈະເອົາຄຳຕອບ ກ ຫລື ຂ.

   (1) ປ້າຍຢູ່ເທິງຖນົນບອກວ່າຄວາມໄວສູງສຸດບໍ່ໃຫ້ກາຍ 55 ໄມຕໍ່ຊົ່ວໂມງ. ຖ້າວ່າທ່ານມີວຽກສຸກເສີນທີ່ຈະຕ້ອງຟ້າວໄປ, ທ່ານຕ້ອງ...

   ກ. ແລ່ນຣົດບໍ່ໃຫ້ກາຍ 55.

   ຂ. ແລ່ນເລີຍ 55 ເພາະເຫດສຸກເສີນ.

   (2) ປ້າຍຢູ່ໜ້າໂຮງແຮມບອກວ່າ "ຫ້າມນຳສັດເຂົ້າໂຮງແຮມ," ແຕ່ທ່ານໄດ້ນຳໝານ້ອຍຂອງລູກເຂົ້າມາທີ່ຫ້ອງນອນເພາະບໍ່ຮູ້ກົດ. ຕອນນັ້ນກໍເດິກແລ້ວ ຖ້າຈະໄປຫາໂຮງແຮມໃໝ່ກໍຄົງບໍ່ມີຫ້ອງວ່າງ. ທ່ານ...

   ກ. ໜີຈາກບ່ອນນັ້ນໄປຊອກໂຮງແຮມໃໝ່

   ຂ. ເອົາໝາເຂົ້າໄປຫ້ອງແລະຮັກສາບໍ່ໃຫ້ໝາທຳລາຍສິ່ງຂອງ

   (3) ຢູ່ໜ້າສນາມກິລາມີປ້າຍບອກວ່າ "ຫ້າມຖ່າຍຮູບ" ແຕ່ມື້ນັ້ນກຸ່ມນັກຮ້ອງຊື່ງມີຫລານຂອງທ່ານຢູ່ດ້ວຍຈະຮ້ອງເພງຢູ່ທີ່ນັ້ນ. ທ່ານ...

   ກ. ເຮັດຕາມທີ່ປ້າຍຫ້າມ

   ຂ. ລັກຖ່າຍຮູບແຕ່ບໍ່ໃຫ້ລົບກວນຄົນອື່ນໆ

2. ເວົ້າກັບນັກຮຽນວ່າ, ຜູ້ທີ່ເລືອກ "ກ" ເປັນຜູ້ທີ່ພຍາຍາມເຮັດຕາມກົດ. ຜູ້ທີ່ເລືອກ "ຂ" ເປັນຜູ້ທີ່ບໍ່ສົນໃນເຣື່ອງກົດລະບຽບ ຫລືມັກຈະໃຫ້ເຫດຜົນສ່ວນຕົວ. ແຕ່ສຳລັບທຸກຄົນເຣື່ອງນີ້ກໍເປັນເຣື່ອງທີ່ເຮັດໃຫ້ລຳບາກໃຈ. ໃນບົດຮຽນຂອງພວກເຮົາໃນມື້ນີ້ກໍແມ່ນເຣື່ອງຂອງກົດລະບຽບ, ຊຶ່ງຫລາຍຄົນໃນສມັຍຂອງພຣະເຢຊູຄິດວ່າພຣະເຈົ້າເປັນຜູ້ຕັ້ງໄວ້, ໄດ້ເກີດມາຂັດກັບພຣະເຢຊູຜູ້ຊົງປະສົງທີ່ຈະລະເມີດກົດເຫລົ່ານັ້ນເພື່ອຊ່ວຍຄົນ.

## ນຳພາການສຶກສາພຣະທັມ (ໃຊ້ເວລາປະມານ 30 ນາທີ)

3. ເຕືອນນັກຮຽນວ່າໃນບົດຮຽນຂອງອາທິດທີ່ຜ່ານມາ, ພຣະເຢຊູໄດ້ຕຽມພວກສາວົກເພື່ອການກັບມາຂອງພຣະອົງ. ພຣະທັມພາກຕໍ່ມາກໍໄດ້ເວົ້າເຣື່ອງຄຳທຳນວາຍຂອງພຣະເຢຊູເຣື່ອງການແຕກແຍກຈະເກີດຂຶ້ນເພາະການຕິດຕາມພຣະອົງ (ລູກາ 49-53). ພຣະເຢຊູຊົງເອີ້ນໃຫ້ມີການຖິ້ມໃຈເກົ່າເອົາໃຈໃໝ່. ຂໍ້ຄຳເຫລົ່ານີ້ເປັນເຣື່ອງທີ່ຫລາຍຄົນບໍ່ຢາກໄດ້ຍິນ. ແຕ່ໃນມື້ນີ້ພວກເຮົາໄດ້ຖືກເຕືອນເຖິງຄວາມຫວັງທີ່ພຣະເຢຊູໄດ້ນຳມາເພື່ອເຮົາ.

4. ໃຫ້ຜູ້ນຶ່ງອ່ານ ລູກາ 13:10-17.

5. ແບ່ງນັກຮຽນອອກເປັນສອງກຸ່ມ ແລ້ວຢາຍເຈັ້ຽແລະສໍໃຫ້ທຸກຄົນເພື່ອຕຽມບັກທຶກ. ມອບໃຫ້ກຸ່ມນຶ່ງເປັນຜູ້ບັນທຶກເຫດການຈາກມຸມມອງຂອງຍິງຫລັງກົ່ງ. ແລະອີກກຸ່ມນຶ່ງໃຫ້ບັນທຶກເຫດການຈາກມຸມມອງຂອງນາຍໂຮງທັມ.

6. ນຳພາການສຶກສາພຣະທັມເປັນພາກໆໄປ.
   - ລູກາ 13:10-11. ຊີວິດທ່ານເປັນແນວໃດກ່ອນພົບພຣະເຢຊູ?
   - ລູກາ 13:12-14. ຈາກມຸມມອງຂອງທ່ານ, ອະທິບາຍວ່າມີຫຍັງເກີດຂຶ້ນເວລາພຣະເຢຊູປິ່ນປົວພຍາດ?
   - ລູກາ 13:15-17. ອະທິບາຍທ່າທີຂອງພຣະເຢຊູເວລາຖືກຕິຕຽນ. ຄວາມຄິດຂອງພຣະເຢຊູສຳລັບຍິງຄົນນັ້ນແລະການຕອບຂອງພຣະອົງເຮັດໃຫ້ທ່ານຮູ້ສຶກແນວໃດ?
   - ທ່ານຄິດວ່າແຕ່ນີ້ຕໍ່ໄປຊີວິດຂອງທ່ານ ແລະຊີວິດຂອງພຣະເຢຊູຈະປ່ຽນແປງບໍ່?

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

7. ໃຫ້ຜູ້ນຶ່ງຈາກແຕ່ລະກຸ່ມອ່ານສິ່ງທີ່ເຂົາເຈົ້າໄດ້ບັນທຶກໄວ້.

8. ສຳລັບຍິງຫລັງກົ່ງ ແລະພຣະເຢຊູ, ການມາໂຮງທັມໃນວັນຊະບາໂຕມີຄວາມສຳຄັນແນວໃດໃນຊີວິດ?

9. ພຣະເຢຊູຊົງເມດຕາຍິງຄົນນີ້ ແລະພຣະອົງໄດ້ປິ່ນປົວເຂົາ. ພຣະເຢຊູເຮັດໃຫ້ພວກຕໍ່ຕ້ານພຣະອົງເກີດຄວາມລະອາຍໃຈດ້ວຍວິທີໃດ?

10. ຍິງຄົນນີ້ໄດ້ສັຣເສີນພຣະເຈົ້າຫລັງຈາກໄດ້ຫາຍຈາກພຍາດ (13); ປະຊາຊົນກໍຊື່ນຊົມຍິນດີ (17). ຖາມ: ພວກເຮົາເຄີຍພາດໂອກາດທີ່ຈະສັຣເສີນພຣະເຈົ້າ ເໝືອນດັ່ງພວກຜູ້ນຳທາງສາສນານີ້ບໍ່?

11. ອ່ານ, "ກົດຣະບຽບເປັນສິ່ງຈຳເປັນເພື່ອຮັກສາຄວາມເປັນຣະບຽບໃນສັງຄົມ; ແຕ່ພວກເຮົາກໍສາມາດດັດແປງກົດຣະບຽບເຫລົ່ານັ້ນໄດ້ເພື່ອຈະໄດ້ຊ່ວຍເຫລືອຄົນ." ຖາມ: ມີກົດແນວໃດແດ່ທີ່ພຣະເຈົ້າໄດ້ຕັ້ງໄວ້ໃນໂລກນີ້? ມີກົດທີ່ມະນຸດສ້າງຂຶ້ນເອງແນວໃດແດ່ ທີ່ກົດກັ້ນບໍ່ໃຫ້ພວກເຮົາຊ່ວຍຄົນທີ່ຂັດສົນ? ຖ້າພວກເຮົາເຮັດຜິດກົດເພື່ອຊ່ວຍຄົນ, ພວກເຮົາກໍຈະຖືກຕິຕຽນເໝືອນດັ່ງພຣະເຢຊູບໍ່? ເໝືອນດັ່ງພຣະເຢຊູ, ມີຫຍັງແດ່ທີ່ເຮັດໃຫ້ພວກເຮົາຊົມຊື່ນຍິນດີ?

*ສຈ. ດຣ. ສິດນີ ຄານ*

## <u>ຄຳແນະນຳສຳລັບຄຣູສອນ</u>

## <u>ບົດຮຽນທີ 9</u>

## <u>ສລອງພຣະຄຸນສຳລັບທຸກຄົນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ລູກາ 15:11-32

**<u>ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:</u>** ລູກາ 15

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຜູ້ຕິດຕາມພຣະເຢຊູຈະຕ້ອງເຂົ້າໃຈວ່າພຣະຄຸນພຣະເຈົ້າແມ່ນສຳລັບທຸກໆຄົນ ບໍ່ວ່າພວກເຂົາເຈົ້າຈະຢູ່ໃນຖານະໃດກໍຕາມ.

**<u>ຄຳຖາມເພື່ອການສຳຣວດ:</u>** ທ່ານເຄີຍຄິດບໍ່ວ່າ ອາດຈະມີບາງຄົນທີ່ພຣະເຈົ້າບໍ່ຊົງຮັກເລີຍ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອພິຈາຣະນາເບິ່ງທ່າທີແລະການປະພຶດຂອງຂ້ອຍກັບຄົນທົ່ວໄປ ວ່າມັນສອດຄ່ອງກັບຄວາມເຂົ້າໃຈທີ່ວ່າພຣະຄຸນພຣະເຈົ້າແມ່ນສຳລັບທຸກໆຄົນ.

### <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ປະກາດວ່າມື້ນີ້ທ່ານຈະເລີ້ມການຮຽນດ້ວຍຄຳຖາມເພື່ອຊວນໃຫ້ທຸກຄົນໄດ້ຄິດ. ຖາມນັກຮຽນເທື່ອລະຄົນໂດຍໃຊ້ຄຳຖາມດັ່ງຕໍ່ໄປນີ້:
    ກ. ທ່ານເຄີຍເຫັນຜູ້ໃດຜູ້ນຶ່ງ ແລ້ວຖາມຕົວເອງວ່າ, ພຣະເຈົ້າຈະຮັກຄົນຜູ້ນີ້ໄດ້ແນວໃດ?
    ຂ. ເວລາທ່ານໄດ້ຍິນວ່າມີຄົນຜູ້ນຶ່ງກຳລັງຕໍ່ສູ້ພຣະເຈົ້າ, ທ່ານຫລຽວເຫັນຮູບພາບແນວໃດແດ່?
    ຄ. ບຸກຄົນທີ່ເຊື່ອຟັງພຣະເຈົ້າຢູ່ທາງພາຍນອກ ເຄີຍຕໍ່ສູ້ພຣະເຈົ້າພາຍໃນຈິດໃຈບໍ່?
    ງ. ມີຜູ້ໃດແດ່ທີ່ຕ້ອງການພຣະຄຸນຂອງພຣະເຈົ້າ?

### <u>ນຳການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

2. ສລູບເຣື່ອງຈາກພຣະທັມ ຫລັງຈາກບົດຮຽນທີ່ຜ່ານມາ.
    - ລູກາ 13:18-30. ຄຳສອນເຣື່ອງຣາຊອານາຈັກຂອງພຣະເຈົ້າ
    - ລູກາ 13:31-35. ພຣະເຢຊູຊົງເສັຽພຣະທັຍຍ້ອນກຸງເຢຣູຊາເລັມ
    - ລູກາ 14:15-24. ການແຜ່ຂຍາຍຂອງພຣະຣາຊອານາຈັກພຣະເຈົ້າ
    - ລູກາ 14: 25-35. ຄວາມເສັຽສລະໃນການເປັນສາວົກ

3. ອ່ານ ລູກາ 15:1-10. ອີກເທື່ອນຶ່ງພວກເຮົາໄດ້ເຫັນພວກຜູ້ຄັດຄ້ານພຣະເຢຊູກ່າວຫາພຣະອົງ. ແຕ່ພຣະເຢຊູພຍາຍາມທີ່ຈະສັ່ງສອນພວກເຂົາ. ຖາມ: ພຣະເຢຊູຕ້ອງການໃຫ້ພວກເຂົາເຂົ້າໃຈເຣື່ອງຫຍັງແດ່?

4. ໃນລູກາ 15:1-10, ພຣະເຢຊູຊົງສອນຄຳອຸປມາສອງເຣື່ອງ-- ເຣື່ອງແກະທີ່ເສັຽ ແລະເຣື່ອງເງິນທີ່ເສັຽ. ອະທິບາຍວ່າຄຳອຸປມາແມ່ນຫຍັງ, ໂດຍໃຊ້ຄຳນຳໃນບົດຮຽນນີ້ຊ່ວຍໃນການອະທິບາຍ?

5. ຂຽນໃສ່ກະດານ "ລູກທີ່ເສັຽ" ແລະບອກນັກຮຽນວ່າເຣື່ອງລູກເສັຽເປັນເຣື່ອງທີ່ຮູ້ກັນທົ່ວໄປ. ມີຄົນຂຽນປື້ມແລະເຣື່ອງຕ່າງໆໃນທຳນອງນີ້ໂດຍໃຊ້ເຣື່ອງຈາກພຣະສັນຍາໃໝ່ນີ້.

6. ຖາມ: ເຖິງວ່າຄຳອຸປມານີ້ແມ່ນເວົ້າເຣື່ອງລູກເສັຽ, ແຕ່ທ່ານຮູ້ບໍ່ວ່າມີຕົວປະກອບອີກຈັກຄົນໃນຄຳອຸປມານີ້? ຈຸດປະສົງອັນນຶ່ງຂອງຄຳອຸປມານີ້ ຄືຊ່ວຍພວກເຮົາໃຫ້ໄດ້ຮຽນຈາກຕົວປະກອບທັງສາມຄົນໃນເຣື່ອງນີ້.

7. ຂຽນໃສ່ກະດານ: ສິ່ງທີ່ພວກເຮົາຮຽນຮູ້ຈາກ... "ລູກທີ່ເສັຽ," "ພໍ່," ແລະ "ອ້າຍກົກ." (ໃຫ້ເຮັດເປັນສາມແຖວແລະປະວ່າງໄວ້ສຳລັບຄຳຕອບ). ຖາມນັກຮຽນ ແລ້ວຂຽນຄຳຕອບໃສ່ໃຫ້ຖືກແຖວ (ໃຊ້ຄຳຖາມໃນຂໍ້ 8).

8. ໃຫ້ຜູ້ນຶ່ງອ່ານ 15: 11-16 ແລະຖາມ:
   - ລູກຊາຍນ້ອຍຕ້ອງການຊີວິດແບບໃດ?
   - ພໍ່ຕອບຄຳຮ້ອງຂໍຂອງເຂົາແນວໃດ?
   - ລູກທີ່ເສັຽໄດ້ຮຽນຮູ້ຫຍັງແດ່?

9. ໃຫ້ຜູ້ນຶ່ງອ່ານ 15:17-20. ໃຊ້ຄຳຖາມໃນຂໍ້ 8 ອີກ. ຂຽນຄຳຕອບໃສ່ກະດານໃຫ້ຖືກແຖວ.

10. ອ່ານ 15:21-24. ຖາມ:
   - ລູກທີ່ເສັຽຈະເຮັດແນວໃດເພື່ອຈະໄດ້ຄືນດີກັບພໍ່?
   - ການຕ້ອນຮັບຂອງພໍ່ມີຄວາມສຳຄັນແນວໃດ?
     (ຂຽນຄຳຕອບໃສ່ກະດານ)

11. ອ່ານ 15:25-32. ຖາມ:
   - ລູກຊາຍກົກເຮັດແນວໃດເມື່ອເຂົາໄດ້ຍິນຂ່າວ?
   - ທ່ານຄິດວ່າຄວາມຮູ້ສຶກຂອງເຂົາຖືກຕ້ອງບໍ່? ຖ້າບໍ່, ເປັນຫຍັງ?
   - ມີຫລັກຖານຫຍັງແດ່ທີ່ຊີ້ໃຫ້ເຫັນວ່າພໍ່ກໍຮັກລູກກົກເຊັ່ນກັນ?
     (ຂຽນຄຳຕອບໃສ່ກະດານ)

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

12. ໃຫ້ນັກຮຽນຊ່ວຍກັນອ່ານພຣະທັມຕໍ່ໄປນີ້: ລູກາ 15:6-7; ລູກາ 15:9-10; ລູກາ 15:23-24; ລູກາ 15:32.

13. ຂໍ້ສັງເກດ: ພຣະທັມທຸກຂໍ້ໃນຂ້າງເທິງນີ້ໄດ້ເວົ້າເຖິງຄວາມຊົມຊື່ນຍິນດີ. ສລູບວ່າ:
   - ຖ້າພວກເຮົາເປັນຜູ້ທີ່ຖືກ "ພົບ," ເພາະເຮົາໄດ້ເສັຽໄປ, ພວກເຮົາກໍມີເຫດໃຫ້ມີການສລອງ. ສິ່ງນັ້ນຈະປ່ຽນແປງຊີວິດພວກເຮົາແນວໃດ?
   - ຖ້າພວກເຮົາເປັນຜູ້ທີ່ຖືກ "ພົບ," ເພາະເຮົາໄດ້ເສັຽໄປ, ພວກເຮົາບໍ່ແມ່ນຜູ້ດຽວທີ່ພຣະບິດາໄດ້ແຜ່ພຣະຄຸນໃຫ້. ສິ່ງນັ້ນຈະປ່ຽນແປງຊີວິດພວກເຮົາແນວໃດ?

*ສຈ. ດຣ. ສິດນີ ຄານ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 10
## ສະແດງຄວາມຮູ້ບຸນຄຸນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 17:11-19
**ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:** ລູກາ 17:11-19
**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຕິດຕາມພຣະຄຣິດສະແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບພຣະຄຸນຂອງພຣະອົງ ໂດຍການນຳພຣະຄຸນໄປຫາຄົນທີ່ຖືວ່າເປັນຄົນນອກສັງຄົມ.

**ຄຳຖາມເພື່ອການສຳຣວດ:** ທ່ານຈະສະແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບພຣະຄຸນຂອງພຣະອົງວິທີໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ຮູ້ວ່າການສະແດງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າສຳລັບພຣະຄຸນຂອງພຣະອົງ ແມ່ນການນຳພຣະຄຸນໄປຫາຄົນທີ່ຖືວ່າເປັນຄົນນອກສັງຄົມ.

### ແຜນສຳລັບການສອນ

**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ອ່ານເຣື່ອງຕໍ່ໄປນີ້ໃຫ້ນັກຮຽນຟັງ:
   ປີນຶ່ງທີ່ຜ່ານມາ, ນາງແອນນາໄດ້ສູນເສັຽທຸກຢ່າງທີ່ລາວມີເພາະໄຟໄໝ້ບ້ານ. ແອນນາເປັນແມ່ຮ້າງແລະ ເປັນຄົນມີຖານະຕໍ່າ. ລາວໄດ້ເພິ່ງຄຣິສຕະຈັກຂອງລາວສຳລັບສິ່ງຂອງຕ່າງໆ, ເພິ່ງໝູ່ເພື່ອນສຳລັບຄວາມອົບອຸ່ນ, ແລະ ເພິ່ງພຣະເຈົ້າສຳລັບການດຳເນີນຊີວິດ. ເວລາໃດທີ່ແອນນາເກີດມີຄວາມໂສກເສົ້າ ນາງກໍໄດ້ໄປຫາຜູ້ໃຫ້ຄຳປຶກສາ. ນາງພຍາຍາມເຮັດທຸກຢ່າງເພື່ອຮັກສາຄອບຄົວໄວ້ໃຫ້ເປັນອັນນຶ່ງອັນດຽວກັນ ແລະນາງກໍໄດ້ຍ້າຍບ້ານ. ໃນຂະນະທີ່ນາງກຳລັງຄ່ອຍໆຟື້ນຕົວຂຶ້ນ, ມີຫຍັງບໍ່ທີ່ນາງສາມາດສະແດງຄວາມຮູ້ບຸນຄຸນ? ລາວຈະຂອບໃຈຜູ້ໃດແດ່? ໃຜແດ່ຈະໄດ້ຮັບຜົນດີຈາກການສະແດງຄວາມຮູ້ບຸນຄຸນຂອງນາງແອນນາ? (ບັນທຶກຄຳຕອບຂອງນັກຮຽນໃສ່ກະດານ)

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

2. ໃຫ້ນັກຮຽນຜູ້ນຶ່ງອ່ານ ລູກາ 17:11-19.

3. ເຕືອນນັກຮຽນວ່າເຣື່ອງນີ້ເກີດຂຶ້ນຕອນພຣະເຢຊູກຳລັງເດີນທາງໄປສູ່ນ້ຳກາງແຂນ. ພຣະອົງສະເດັດໄປກຸງເຢຣູຊາເລັມເປັນເທື່ອສຸດທ້າຍ, ແລະຫົນທາງອາດຈະເຕັມໄປດ້ວຍຜູ້ຄົນເພາະເວລານັ້ນກໍໃກ້ຈະເຖິງວັນປັສຄາແລ້ວ.

4. ແບ່ງນັກຮຽນອອກເປັນສອງກຸ່ມ ແລະກຸ່ມນຶ່ງມີປະມານສອງຫາຫົກຄົນ. ມອບໃຫ້ແຕ່ລະກຸ່ມໄປຄົ້ນຄວ້າສຶກສາເບິ່ງຫົວຂໍ້ຕ່າງໆຕໍ່ໄປນີ້ (ແລ້ວມາລາຍງານຜົນ).
   - ພຍາດຂີ້ທູດ (ເບິ່ງຫົວຂໍ້ "ພຣະເຢຊູຊົງພົບຄົນຂີ້ທູດສິບຄົນ")
   - ໜ້າທີ່ຂອງພວກປະໂຣຫິດ (ເບິ່ງຫົວຂໍ້ "ພຣະເຢຊູຊົງພົບຄົນຂີ້ທູດສິບຄົນ")
   - ໄທຊາມາເຣັຽ (ເບິ່ງຫົວຂໍ້ "ໄທຊາມາເຣັຽກັບມາຂອບພຣະຄຸນພຣະເຢຊູ")

5. ໃຫ້ແຕ່ລະກຸ່ມລາຍງານຜົນຂອງການຄົ້ນຄວ້າ. ໃຫ້ຜູ້ນຶ່ງອ່ານ ລູກາ 17:11-13. ຖາມ: ເນື່ອງຈາກວ່າມີຄົນຂີ້ທູດ

ສິບຄົນ, ທ່ານຄິດວ່າແຕ່ລະຄົນເຂົາຄິດແນວໃນເວລາພວກເຂົາເອີ້ນພຣະເຢຊູໃຫ້ຊ່ວຍເຫລືອ?

6. ພານັກຮຽນພິສູດເບິ່ງຂໍ້ 14. ເບິ່ງລຳດັບຂອງເຫດການ: ຄົນຂີ້ທູດບໍ່ໄດ້ລໍຖ້າໃຫ້ພຍາດດີ ກ່ອນທີ່ຈະໄປສະແດງຕົວຕໍ່ປະໂຣຫິດ; ພວກເຂົາພາກັນເດີນທາງໄປ, ແລະກໍໄດ້ດີສະອາດຫລັງຈາກທີ່ອອກຈາກບ່ອນນັ້ນໄປ. ຖາມ: ສິ່ງທີ່ເກີດຂື້ນໃນຕອນນີ້ສອນພວກເຮົາແນວໃດແດ່ເຣື່ອງການເຊື່ອຟັງ? ແລະເຣື່ອງຄວາມເຊື່ອ?

7. ພານັກຮຽນພິຈາຣະນາຂໍ້ 15-16. ຖາມ: ທ່ານຄິດວ່າເປັນຫຍັງຄົນຂີ້ທູດເກົ້າຄົນບໍ່ໄດ້ກັບຄືນມາ?

8. ທົບທວນເບິ່ງຂໍ້ 17-19, ຖາມນັກຮຽນວ່າພວກເຂົາເຈົ້າຄິດແນວໃດໃນຕອນນີ້ ກ່ຽວກັບພຣະເຢຊູ. ຖາມ: ພຣະເຢຊູຊົງສອນພວກສາວົກເຣື່ອງຫຍັງແດ່ ໃນຂະນະທີ່ພຣະອົງຊົງຫຍັບໃກ້ເຂົ້າຫາໄມ້ກາງແຂນ?

9. ອ່ານຂໍ້ 19 ໃຫ້ທຸກຄົນໄດ້ຍິນ. ໄທຊາມາເຣັຽຂາບລົງທີ່ພຣະບາດຂອງພຣະເຢຊູ (16), ແລະໃນຕອນນີ້ພຣະອົງຊົງບອກລາວ, "ຈົ່ງລຸກຂື້ນໄປເທີນ." ໃຫ້ນັກຮຽນໃຫ້ຄວາມເຫັນເຣື່ອງຄວາມສັມພັນຣະຫວ່າງການ "ຂາບລົງ" ແລະ "ການລຸກຂື້ນໄປ."

10. ຕັ້ງໃຈເບິ່ງຂໍ້ 18-19, ພານັກຮຽນເບິ່ງໂອວາດຂອງພຣະເຢຊູສຳລັບໄທຊາມາເຣັຽຜູ້ນັ້ນ. ຖາມ: ພຣະວິນຍານບໍຣິສຸດຊົງໃຫ້ລາງວັນກັບພວກເຮົາບໍ່ ເວລາພວກເຮົາເຊື່ອຟັງ? ພຣະອົງຊົງໃຫ້ລາງວັນກັບພວກເຮົາບໍ່ເວລາພວກເຮົາສະແດງການຮູ້ຈັກບຸນຄຸນ?

11. ເຕືອນນັກຮຽນເຣື່ອງນາງແອນນາ ໃນຕອນຕົ້ນຂອງບົດຮຽນ. ເຕືອນພວກເຂົາເຈົ້າເຖິງຄຳຕອບທີ່ໄດ້ໃຫ້ໄວ້ກ່ອນແລ້ວໃນຄຳຖາມທີ່ວ່າ, ໃຜແດ່ຈະໄດ້ຮັບຜົນດີຈາກການສະແດງຄວາມຮູ້ບຸນຄຸນຂອງນາງແອນນາ?

12. ຖາມ: ມີອີກວິທີໃດແດ່ທີ່ນາງແອນນາສາມາດສະແດງອອກເຖິງການຮູ້ຈັກບຸນຄຸນຕໍ່ພຣະເຈົ້າ?

13. ຢາຍກະດາດແລະສີໃຫ້ນັກຮຽນແຕ່ລະຄົນ. ບອກເຂົາເຈົ້າວ່າ, ພວກເຮົາຈະທົດລອງເບິ່ງ "ການສຳຣວດເບິ່ງການຮູ້ບຸນຄຸນ ແລະທ່າທີພາຍໃນຫ້ານາທີ," ເໝືອນດັ່ງຊ່າງແປງຣົດທີ່ປ່ຽນນ້ຳມັນເຄື່ອງ, ກວດເບິ່ງຕີນຣົດ, ຫລືຊ່ອມແປງຣົດ.

14. ໃຫ້ເວລານຶ່ງນາທີ, ບອກນັກຮຽນໃຫ້ຂຽນລົງໃນເຈັ້ຽເຣື່ອງພຣະພອນ ແລະພຣະຄຸນຂອງພຣະເຈົ້າໃນຊີວິດຂອງພວກເຂົາ. (ຕັ້ງເວລານຶ່ງນາທີ ແລະບອກໃຫ້ທຸກຄົນຮູ້ເມື່ອໝົດເວລາ)

15. ໃຫ້ເວລາສີ່ນາທີ, ບອກນັກຮຽນໃຫ້ຂຽນໃສ່ເຈັ້ຽວ່າມີວິທີໃດແດ່ທີ່ພວກເຂົາເຈົ້າສາມາດສະແດງຄວາມຮູ້ບຸນຄຸນຕໍ່ພຣະຄຸນຂອງພຣະເຈົ້າ ໂດຍການນຳພຣະຄຸນໄປໃຫ້ຄົນອື່ນໆ. (ຕັ້ງເວລາສີ່ນາທີ ແລະບອກໃຫ້ທຸກຄົນຮູ້ເມື່ອໝົດເວລາ). ຊັກຊວນທຸກຄົນໃຫ້ສຳຣວດຕົວເອງຫລາຍໆເທື່ອໃນອາທິດທີ່ຈະມາເຖິງນີ້.

16. ປິດການຮຽນດ້ວຍຄຳອະທິຖານຂໍພຣະເຈົ້າໃຫ້ນຳພາແຕ່ລະຄົນໃຫ້ໄດ້ສະແດງການຮູ້ບຸນຄຸນຕໍ່ພຣະເຈົ້າ ໂດຍການນຳພຣະຄຸນຂອງພຣະອົງໄປໃຫ້ຄົນທັງຫລາຍທີ່ຖືວ່າຢູ່ນອກສັງຄົມ ເພາະພວກເຂົາກໍຕ້ອງການພຣະຄຸນພຣະເຈົ້າເໝືອນດັ່ງພວກເຮົາທຸກໆຄົນ.

*ສຈ. ດຣ. ສິດນີ ຄານ*

## <u>ຄໍາແນະນໍາສໍາລັບຄຣູສອນ</u>

## <u>ບົດຮຽນທີ 11</u>

## <u>ຊັບສົມບັດທີ່ແທ້ຈິງ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ລູກາ 18:18-30

**<u>ຂໍ້ພຣະຄັມພີສໍາລັບສໍາລັບເບື້ອງຫຼັງ:</u>** ລູກາ 18:18-30

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ຊັບສົມບັດທີ່ແທ້ຈິງໃນຊີວິດບໍ່ແມ່ນເງິນຄໍາແຕ່ແມ່ນຣາຊແຜ່ນດິນຂອງພຣະເຈົ້າ.

**<u>ຄໍາຖາມເພື່ອການສໍາຣວດ:</u>** ມີຫຍັງແດ່ທີ່ມີຄຸນຄ່າຫລາຍກວ່າເງິນຄໍາ? ແມ່ນແທ້ບໍ່?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຈະໄດ້ຮູ້ຄວາມສໍາຄັນຂອງຣາຊແຜ່ນດິນຂອງພຣະເຈົ້າ ແລະຄວາມສໍາຄັນຂອງເງິນຄໍາໃນຊີວິດ.

### <u>ແຜນການສໍາລັບສອນ</u>

### <u>ນໍາເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຢາຍເຈັ້ຽແລະສໍໃຫ້ນັກຮຽນ. ໃຫ້ແຕ່ລະຄົນຂຽນຫ້າຢ່າງທີ່ເຂົາເຈົ້າໄດ້ສະສົມໄວ້. ໃຊ້ເວລາເລັກນ້ອຍເພື່ອແບ່ງປັນສິ່ງທີ່ເຂົາເຈົ້າໄດ້ຂຽນລົງ. ຂຽນຄໍາເຫັນຕ່າງໆໃສ່ກະດານໂດຍໃສ່ຫົວເຣື່ອງວ່າ, "ສິ່ງທີ່ເຮົາສະສົມໄວ້." ພານັກຮຽນພິຈາຣະນາເບິ່ງຫລາຍໆຢ່າງທີ່ໄດ້ຂຽນໄວ້ໃນກະດານ. ສັງເກດເບິ່ງວ່າອັນໃດເປັນສິ່ງຂອງທີ່ພວກເຮົາຈັບບາຍໄດ້ ແລະອັນໃດເປັນສິ່ງທີ່ບໍ່ສາມາດຈັບບາຍໄດ້. ຢ່າປຽບທຽບວ່າອັນໃດດີກວ່າກັນ. (ຢ່າລຶບກະດານ ເພາະຈະໄດ້ໃຊ້ໃນຂໍ້ 8 ອີກ).

2. ແນະນໍາບົດຮຽນໃນມື້ນີ້. ເຣື່ອງໃນບົດຮຽນນີ້ເປັນທີ່ຮູ້ກັນດີ ໂດຍສະເພາະເວລາພວກເຮົາເວົ້າເຖິງສິ່ງທີ່ພວກເຮົາຖືວ່າສໍາຄັນທີ່ສຸດໃນຊີວິດຂອງຕົນ.

### <u>ນໍາພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ຊວນນັກຮຽນໃຫ້ຄິດເຖິງຜູ້ໃດຜູ້ນຶ່ງທີ່ພວກເຂົາເຈົ້າຮູ້ຊື່ວ່າມີຖານະດີ ຫລືມີອໍານາດ (ອາດຈະແມ່ນຕົວນັກຮຽນເອງກໍໄດ້).ຖາມ: ທ່ານຄິດວ່າຄົນຜູ້ນັ້ນມີຄວາມພໍໃຈໃນຊີວິດບໍ່? ແລ້ວຖາມ: ແມ່ນຫຍັງເຮັດໃຫ້ລາວພໍໃຈ? ຫລື, ຄົນຜູ້ນີ້ໄດ້ເຮັດຫຍັງແດ່ເພື່ອຊອກຫາຄວາມພໍໃຈ? ໃຫ້ໂອກາດຕອບ. ອ່ານ ລູກາ 18:18-19.ທ່ານລູກາ, ຜູ້ຂຽນ, ໄດ້ອະທິບາຍວ່າຊາຍຄົນນີ້ເປັນຜູ້ປົກຄອງ(18:23), ແລະເປັນຄົນຮັ່ງມີ. ມັດທາຍກໍໄດ້ບອກວ່າຊາຍຄົນນີ້ເປັນຄົນ "ໜຸ່ມ" (ມັດທາຍ 18:20,22). ອະທິບາຍວ່າໃນຖານະ "ຜູ້ປົກຄອງ" ລາວເປັນຜູ້ນໍາໃນຄຸ້ມບ້ານຂອງຕົນ.

4. ອ່ານ ລູກາ 18:20-23. ຂຽນພຣະບັນຍັດສິບປະການໃສ່ໂປສເຕີໄວ້ລ່ວງໜ້າ ຫລືອາດຈະພິມໃສ່ກະດາດແລ້ວກອບປີຫລາຍໆໃບເພື່ອແຈກຢາຍໃຫ້ນັກຮຽນ.

### <u>ພຣະບັດຍັດສິບປະການ (ອົພຍົກ 20:1-17)</u>

1. ເຮົາແມ່ນພຣະຜູ້ເປັນເຈົ້າຂອງພວກເຈົ້າ.ພວກເຈົ້າຢ່າມີພຣະອື່ນນອກຈາກເຮົາ.
2. ພວກເຈົ້າຢ່າເຮັດຮູບໂຄຣົບສໍາລັບຕົນ.
3. ພວກເຈົ້າຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າໄປໃນທາງທີ່ຜິດ.

4. ພວກເຈົ້າຈົ່ງນັບຖືວັນສິນໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ.
5. ຈົ່ງນັບຖືບິດາມານດາຂອງເຈົ້າ.
6. ພວກເຈົ້າຢ່າຂ້າຄົນ.
7. ຢ່າລ່ວງເກີນຜົວເມັຽຜູ້ອື່ນ.
8. ຢ່າລັກຊັບ.
9. ຢ່າເປັນພຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ.
10. ຢ່າອິດສາຢາກໄດ້ເຮືອນຂອງຜູ້ອື່ນ.

ເຕືອນນັກຮຽນວ່າ ພຣະບັນຍັດສີ່ຂໍ້ແລກເວົ້າເຖິງຄວາມສັມພັນຣະຫວ່າງພວກເຮົາກັບພຣະເຈົ້າ ແລະຕໍ່ໄປຫົກຂໍ້ເວົ້າເຣື່ອງຄວາມສັມພັນຣະຫວ່າງພວກເຮົາແລະຄົນອື່ນໆ. ປຽບທຽບໃສ່ພຣະບັນຍັດທີ່ພຣະເຢຊູກ່າວເຖິງໃນຂໍ້ 20 (7,6,8, 9, ແລະ 5) ແລະສັງເກດເບິ່ງພຣະບັດຍັດທີ່ພຣະເຢຊູບໍ່ໄດ້ເອີ່ຍເຖິງ (1,2,3,4, ແລະ10). ສັງເກດເບິ່ງວ່າຜູ້ຊາຍຄົນນີ້ໄດ້ເວົ້າວ່າລາວໄດ້ຮັກສາພຣະບັນຍັດຫ້າຂໍ້ນີ້ "ຕັ້ງແຕ່ເປັນເດັກນ້ອຍມາ." ຖາມ: ທ່ານຄິດວ່າຊາຍຄົນນີ້ໄດ້ຮັກສາພຣະບັນຍັດອີກຫ້າຂໍ້ ອື່ນບໍ່? ທ່ານຄິດວ່າເຂົາເວົ້າຄວາມຈິງບໍ່? ຖ້າບໍ່, ເປັນຫຍັງຈິ່ງບໍ່? ຖາມ: ເປັນຫຍັງຊາຍຜູ້ນີ້ຈຶ່ງອອກໜີໄປດ້ວຍ "ຄວາມທຸກໜັກໃຈຫລາຍ?" (18:23).

5. ຖາມ: ທ່ານຄິດວ່າພຣະເຢຊູຊົງສອນໃຫ້ພວກເຮົາໄປຂາຍຊັບສົມບັດທັງໝົດບໍ່? ໃຫ້ເວລາສົນທະນາ. ເບິ່ງບົດຮຽນໃນຫົວຂໍ້ "ຊອກຫາຜິດບ່ອນ" ເພື່ອຊ່ວຍໃນການສົນທະນາ.

6. ອ່ານ 18:24-30. ສັງເກດ: ພຣະເຢຊູໄດ້ຊົງເວົ້າໃນສິ່ງທີ່ມະນຸດບໍ່ສາມາດຈະເຮັດໄດ້ດ້ວຍຕົວເອງ ໂດຍສະເພາະເຣື່ອງການປະຖິ້ມຊັບສົມບັດທີ່ມີຢູ່. ແຕ່ພຣະອົງໄດ້ຊົງບອກວ່າ "ສິ່ງທີ່ມະນຸດເຮັດບໍ່ໄດ້ ຝ່າຍພຣະເຈົ້າຊົງເຮັດໄດ້." ຖາມ: ມີສິ່ງໃດແດ່ທີ່ພຣະເຈົ້າຊົງເຮັດໄດ້ ແຕ່ມະນຸດເຮັດບໍ່ໄດ້. ໃຫ້ເວລາຕອບ. ຖ້າບໍ່ມີໃຜເວົ້າເຖິງ ໃຫ້ເວົ້າເຣື່ອງວ່າ ພຣະເຈົ້າຜູ້ດຽວເທົ່ານັ້ນທີ່ສາມາດໃຫ້ອະພັຍມະນຸດສຳລັບຄວາມຜິດບາບຂອງພວກເຂົາ. ມະນຸດບໍ່ສາມາດທີ່ຈະເຮັດໃຫ້ຕົນລອດພົ້ນໄດ້. (ຖ້າບໍ່ແນ່ໃຈວ່າທຸກຄົນເຂົ້າໃຈ ໃຫ້ເວົ້າອີກເທື່ອນຶ່ງວ່າ ຄວາມລອດພົ້ນໄດ້ມາເພາະຄວາມເຊື່ອ, ບໍ່ແມ່ນຍ້ອນການກະທຳຂອງພວກເຮົາ. ທ່ານອາດຈະໄດ້ເວົ້າກັບບາງຄົນທີ່ຍັງບໍ່ເປັນຄຣິສຕຽນ).

7. ໃນມຸມນຶ່ງຂອງກະດານໃຫ້ຂຽນໃສ່ວ່າ: "ພວກສາວົກໄດ້ສລະຫຍັງແດ່?" ຖາມ: ພວກອັຄສາວົກສິບສອງຄົນໄດ້ສລະຫຍັງແດ່ເພື່ອຈະຕິດຕາມພຣະເຢຊູ? ຂຽນຄຳຕອບໃສ່ກະດານ. ຖາມ: ພຣະເຢຊູໄດ້ຊົງໃຫ້ຄວາມໝັ້ນໃຈແນວໃດແດ່ກັບພວກສາວົກ ໃນໂລກໜ້າ? ຂຽນຄຳຕອບໃສ່ກະດານ ແລະໃສ່ຫົວຂໍ້ວ່າ, "ຊັບສົມບັດໃນສວັນ."

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ໃຫ້ນັກຮຽນຂຽນຄຳຕອບຂອງຄຳຖາມໃນພາກສຸດທ້າຍຂອງຂໍ້ 7 ໃສ່ເຈັ້ຽທີ່ໄດ້ຕຽມໄວ້ໃນຂໍ້ 1; ເນັ້ນໃສ່ເຣື່ອງຊັບສົມບັດໃນສວັນ. ຖາມ: ແມ່ນຫຍັງຈະເປັນສິ່ງສຳຄັນສຳລັບພວກເຮົາ? ຊັບສົມບັດທີ່ມີຢູ່ໃນໂລກ ຫລືຊັບສົມບັດໃນສວັນ? ເວົ້າວ່າ, ພຣະເຢຊູຊົງທ້າທາຍເສດຖີໜຸ່ມໃຫ້ປະຖິ້ມຊັບສົມບັດ ເພາະສິ່ງນັ້ນໄດ້ເປັນອຸປສັກຣະຫວ່າງເຂົາແລະພຣະເຈົ້າ. ມີຫຍັງແດ່ທີ່ເປັນອຸປສັກສຳລັບທ່ານແລະພຣະເຈົ້າ? ໃຫ້ເວລາຕອບ. ທ່ານຈະເຮັດແນວໃດເພື່ອຈະຍົກອຸປສັກເຫລົ່ານັ້ນອອກໄປ? ໃຫ້ເວລາຕອບ. ອະທິຖານປິດການຮຽນ.

*ສຈ. ດຣ. ສິດນີ ຄານ*

# ບົດແນະນຳຄູສອນ
# ບົດຮຽນທີ 12
# ການກັບໃຈທີ່ສະແດງອອກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 19:1-10
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ລູກາ 19:1-10
**ຈຸດສຳຄັນຂອງບົດຮຽນນີ້:** ການກັບໃຈຢ່າງແທ້ຈິງຈະສະແດງໃຫ້ເຫັນປະຈັກຕາ
**ຄຳຖາມເພື່ອການສຳຣວດ:** ທ່ານສາມາດຮູ້ວ່າຕົນເອງກັບໃຈແທ້ໄດ້ຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຄົ້ນຫາວ່າຂ້າພະເຈົ້າກັບໃຈແທ້ບໍ່ໂດຍການປະຕິບັດແນວໃດແດ່?

**ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳພາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ນັກວິທະຍາສາດໄດ້ສ້າງເຄື່ອງວັດແທກຫລາຍສິ່ງຫລາຍຢ່າງມາແລ້ວ ບໍ່ວ່າແຕ່ວັດແທກເຄື່ອງຈັກເຄື່ອງຍົນ ພວກເຂົາເຈົ້າຍັງສ້າງເຄື່ອງວັດແທກຄວາມຮ້ອນຄວາມເຢັນ ຕລອດເຖິງວັດແທກຫົວໃຈຂອງຄົນ, ແຕ່ຍັງບໍ່ມີໃຜສ້າງເຄື່ອງວັດແທກຄວາມຮັກເທື່ອ. ເຮົາທັງຫລາຍຢາກໄດ້ເຄື່ອງວັດແທກຄວາມເຊື່ອແລະການກັບໃຈຫັນໜີຈາກ ຄວາມຊົ່ວແລ້ວຕິດຕາມພຣະເຢຊູດ້ວຍຄວາມຈິງໃຈ, ເນື່ອງຈາກວ່າເຮົາບໍ່ມີເຄື່ອງວັດແທກ ວັນນີ້ເຮົາຈະເອົາເອົາຊີວິດຂອງທ່ານຊັກຂາຍນາຍດ່ານພາສີມາເປັນເຄື່ອງວັດແທກໄດ້ໃນການກັບໃຈຂອງເຮົາທີ່ສະແດງອອກຢ່າງໃດແດ່.

## ຄຳອະທິບາຍ ລູກາ 19:1-4 ປີນຂຶ້ນສູງກວ່າຜູ້ອື່ນ

1. ຊັກຂາຍແມ່ນຄົນຊາດຢິວເປັນຫົວໜ້າດ່ານພາສີທີ່ມີຮູບຮ່າງເຕັ້ຍ.
2. ໜ້າທີ່ຂອງລາວແມ່ນເກັບພາສີຈາກຄົນຢິວເພື່ອສົ່ງເສີມຈັກກະພັດໂຣມທີ່ປົກຄອງຊາດຢິວ.
3. ຄົນຢິວຖືວ່າລາວເປັນຄົນຂາຍຊາດ ແລະກຽດຊັງລາວ.
4. ລາວຢາກເຫັນພຣະເຢຊູຫລາຍ ເພາະໄດ້ຍິນຊື່ສຽງຂອງພຣະອົງ.
5. ລາວປະລະເວລາຫາເງິນຄຳມາເບິ່ງພຣະເຢຊູ
6. ຜ່ານຜ່າອຸປະສັກຄົນໜາແໜ້ນ ແລະຫາວິທີຈະເບິ່ງພຣະເຢຊູ ໂດຍປີນຂຶ້ນຕົ້ນໄມ້.

## ຄຳອະທິບາຍ 19:5-7 ຊັກຂາຍຕ້ອນຮັບພຣະເຢຊູ

1. ພຣະເຢຊູສົນໃຈຜູ້ທີ່ສົນໃຈພຣະອົງ ບອກວ່າຈະໄປພັກທີ່ເຮືອນຂອງຜູ້ນັ້ນ.

2. ຊັກຂາຍຟ້າວລົງຈາກຕົ້ນໄມ້ມາຕ້ອນຮັບພຣະເຢຊູດ້ວຍຄວາມພູມໃຈ. ສອນເຮົາວ່າເຮົາຈຳຕ້ອງລົງຈາກຕັ່ງແຫ່ງຖານະ, ຕຳແໜ່ງ, ໜ້າຕາ, ຊື່ສຽງສາກ່ອນຈຶ່ງຕ້ອນຮັບພຣະອົງໄດ້.
3. ພວກຟາຣີຊາຍຈົ່ມໃຫ້ພຣະເຢຊູທີ່ໄປພັກເຊົາກັບຄົນເກັບພາສີ (ຄົນນອກສາສນາ) ແຕ່ພຣະເຢຊູບໍ່ໄດ້ຍ່າງອອກເຮືອນຂອງຊັກຂາຍ. ສອນເຮົາເມື່ອຄົນຈົ່ມຫລືເວົ້າຂວັນເຮົາໆກໍບໍ່ສົມຄວນເຊົາຕິດຕາມພຣະເຢຊູ
4. ຊັກຂາຍຄົນນອກສາສນາຕ້ອນຮັບພຣະເຢຊູ ສ່ວນຄົນໃນສາສນາບໍ່ໄດ້ຕ້ອນຮັບພຣະອົງ. ສອນເຮົາວ່າໃຜກໍຕາມຕ້ອນຮັບເອົາພຣະອົງຜູ້ນັ້ນກໍຈະພົ້ນ.

## <u>ຄຳອະທິບາຍ 19:8-10 ສຳຄັນກວ່າຮັ່ງມີ</u>

1.ຊັກຂາຍປະລະໂຕະເກັບເງິນມາຫາພຣະເຢຊູ. ສອນເຮົາວ່າໃນຖານະທີ່ເຮົາເປັນຄຣິສຕຽນເຮົາໄດ້ປະລະການຫາເງິນຄຳມາເຂົ້າເຝົ້າພຣະເຢຊູຄືຊັກຂາຍບໍ່?
2. ເມື່ອລາວພົບພຣະເຢຊູລາວສັນຍາກັບພຣະເຢຊູວ່າ ເຂົ້າຂອງທີ່ລາວມີລາວຈະເອົາໄປແຈກຢາຍໃຫ້ຄົນຍາກຈົນເຄິ່ງນຶ່ງ, ແມ່ນບາດກ້າວແຮກຂອງການກັບໃຈຂອງລາວ.
3. ລາວສັນຍາວ່າຫາກລາວສໍ້ໂກງຜູ້ໃດລາວຈະຍອມສົ່ງຄືນເຈົ້າຂອງເດີມສີ່ເທົ່າ. ສະແດງວ່າລາວກັບໃຈຢ່າງແທ້ຈິງດ້ວຍວ່າເມື່ອກ່ອນສິ່ງເຫລົ່ານີ້ສຳຄັນ ແຕ່ດຽວນີ້ພຣະເຢຊູສຳຄັນກວ່າ.
4. ສິ່ງໜ້າຄິດແມ່ນ
    ກ. ເຄິ່ງນຶ່ງໄປແຈກຢາຍຄົນຍາກຈົນ.
    ຂ. ອີກເຄິ່ງທີ່ສອງຈະສົ່ງເຈົ້າຂອງເດີມສີ່ເທົ່າ ສະແດງວ່າສາມເທົ່າທີ່ໂກງມາ, ຄຳຖາມມີຢູ່ວ່າລາວຈະມີພໍສົ່ງຄືນຫລືບໍ່ ເພາະລາວມີເຫລືອແຕ່ເຄິ່ງດຽວ. ເຣື່ອງນີ້ສອນເຮົາວ່າລາວສະລະຈົນໝົດແລ້ວຕິດຕາມພຣະເຢຊູ.
5. ພຣະເຢຊູປະກາດວ່າ ຄວາມພົ້ນໄດ້ມາເຖິງເຮືອນຫລັງນີ້ແລ້ວ. ເພາະລາວກັບໃຈຢ່າງແທ້ຈິງໂດຍມີຫລັກຖານໃນການກັບໃຈຂອງລາວ. ບົດຮຽນສຳລັບເຮົາແມ່ນເຮົາຢາກໄດ້ຍິນພຣະເຢຊູປະກາດວ່າ ຄວາມລອດພົ້ນໄດ້ມາເຖິງເຮືອນຂອງເຮົາແລ້ວ.

## <u>ຄຳຖາມ:</u>

1. ທ່ານໄດ້ຮຽນສິ່ງໃດແດ່ຈາກຊີວິດຂອງຊັກຂາຍ?

2. ເປັນຫຍັງຊັກຂາຍຈຶ່ງປະລະເງິນຄຳມາຫາພຣະເຢຊູ?

3. ເມື່ອຊັກຂາຍກັບໃຈເຊື່ອແລ້ວພຣະອົງປະກາດຢ່າງໃດ?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# ບົດແນະນຳຄຣູສອນ
# ບົດຮຽນທີ 13
# ເຖິງເປົ້າໝາຍແລ້ວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 23:32-49
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ລູກາ 23:13-49
**ຈຸດສຳຄັນຂອງບົດຮຽນນີ້:** ການຟື້ນພຣະຊົນຂອງພຣະເຢຊູເປັນຄວາມລອດພົ້ນສຳລັບຜູ້ເຊື່ອ
**ຄຳຖາມເພື່ອການສຳຣວດ:** ການຄືນມາຈາກຕາຍຂອງພຣະເຢຊູມີຄວາມສຳຄັນຫຍັງ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຄົ້ນຫາວ່າການຄືນມາຈາກຕາຍມີຄວາມໝາຍຫຍັງສຳລັບຂ້ອຍ

**ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ພາຣະກິຈຂອງພຣະເຢຊູໃນໂລກສຳເຣັດລົງທີ່ເທິງກາງແຂນດ້ວຍຄວາມຕາຍຂອງພຣະອົງແທນຄົນທັງປວງທີ່ເຊື່ອໃນພຣະອົງຈະໄດ້ພົ້ນຈາກບຶງໄຟນະຣົກ. ຫລັງຈາກນັ້ນສາມວັນພຣະອົງກໍຊົງເປັນຄືນມາແລະຢູ່ກັບສາວົກຂອງພຣະອົງສີ່ສິບວັນ ແລ້ວກໍສະເດັດກັບຄືນສູ່ສວັນ. ເຮົາທັງຫລາຍເປັນໜີ້ພຣະຄຸນພຣະອົງທີ່ພຣະອົງຊົງຕາຍໃຊ້ໜີ້ຄວາມຜິດບາບຂອງເຮົາຈົນໝົດສິ້ນ.

**ອ່ານລູກາ 23:32-39 ຊົງຊຳຣະໜີ້**

ກ. **ຂໍ້ 32** ຖືກຄຸມໄປເໝືອນເປັນໂຈນຜູ້ຮ້າຍ . (ຄຣິສຕຽນຖືກຂົ່ມເຫງທຸກວັນນີ້ກໍເໝືອນໂຈນຜູ້ຮ້າຍ) "*ຂ້ອຍໃຊ້ບໍ່ຫ່ອນໃຫຍ່ກວ່ານາຍຂອງຕົນຖ້າເຂົາຂົ່ມເຫງເຮົາ ເຂົາກໍຈະຂົ່ມເຫງທ່ານເໝືອນກັນ* "(ໂຢຮັນ 15:20)
ຂ. **ຂໍ້ 33** ບ່ອນນີ້ງທີ່ເອີ້ນວ່າກະໂຫລກຫົວ ແມ່ນບ່ອນທະຫານໂຣມັນປະຫານນັກໂທດ . ພຣະເຢຊູບໍ່ມີໂທດໃດໆຕາມຄຳສືບສວນຂອງປີລາດໃນຂໍ້ 14. ແຕ່ທີ່ພຣະອົງຍອມຕາຍນັ້ນແມ່ນເພິ່ນຍອມຮັບເອົາຄວາມຜິດບາບຂອງມະນຸດ.
ຄ. **ຂໍ້ 34** ພຣະເຢຊູອ້ອນວອນຂໍໃຫ້ພຣະເຈົ້າອະພັຍພວກທະຫານ ແທນທີ່ພຣະອົງຈະປ້ອຍດ່າເຂົາ ດ້ວຍວ່າພວກເຂົາເຮັດຕາມຄຳສັ່ງຂອງສານແຊນຮິດຣິນ, ສານແຊນຮິດຣິນແມ່ນສານສູງສຸດຂອງໂຣມັນ.
ງ. **ຂໍ້ 3-39** ພຣະເຢຊູຖືກເຍາະເຍີ້ຍສາມປະການຄື;

1. "*ມັນໄດ້ຊ່ອຍຄົນອື່ນໃຫ້ພົ້ນ ຖ້າຄົນນີ້ເປັນພຣະຄຣິດທີ່ພຣະເຈົ້າຊົງເລືອກໄວ້ນັ້ນ ໃຫ້ມັນຊ່ອຍຕົນເອງເສັຽ* "
2. "*ຖ້າເປັນກະສັດຊາດຢິວຈົ່ງຊ່ອຍຕົວເອງໃຫ້ພົ້ນເສັຽ* "
3. *ເຈົ້າເປັນພຣະຄຣິດບໍ່ແມ່ນຫລື ຈົ່ງຊ່ອຍຕົວເອງແລະຊ່ອຍເຮົາໃຫ້ພົ້ນ.*

**ອ່ານ ລູກາ23: 40-44 ຄຳສັນຍາມາເຖິງແລ້ວ**

ກ. ຂໍ້ 40-42 ໂຈນຮ້າຍເຕືອນໂຈນຮ້າຍແລະກັບໃຈເຊື່ອພຣະເຢຊູພາຍຫລັງ.
ຂ. ຂໍ້ 43 ພຣະເຢຊູສັນຍາກັບໂຈນ. *"ເຮົາບອກທ່ານຕາມ ຄວາມຈິງວ່າ ວັນນີ້ທ່ານຈະຢູ່ກັບເຮົາໃນທີ່ສຸຂເສີມ"*
ຄ. ຄຳວ່າ ສຸຂເສີມແປມາຈາກພາສາ ເປີຊຽນ ແປວ່າສວນ, ຕໍ່ມາແປມາເປັນພາສາກຣີກ ແປວ່າສວນເອເດນ ບ່ອນສຸຂເສີມໝົດທຸກຢ່າງ, ສອນເຮົາທັງຫລາຍວ່າຄົນຊົ່ວຮ້າຍປານໃດພຣະເຢຊູກໍຊົງອະພັຍຫາກຍອມກັບໃຈ.
ງ. ຟ້າມືດມີຄວາມໝາຍວ່າຣິດອຳນາດຂອງພຣະເຈົ້າ, ດວງອາທິດບໍ່ສົ່ງແສງເພາະໂສກເສົ້າ ແລະຍັງມີສາສນາສາດແປວ່າ ຄວາມມືດຂອງມະນຸດເຮັດໃຫ້ພຣະເຢຊູຕ້ອງຕາຍ.
ສ. ຜ້າກັ້ງໃນພຣະວິຫານເຮັດດ້ວຍຜ້າແອວແອດຢ່າງດີ, ຈີກແຕ່ເທິງລົງລຸ່ມຊຶ່ງບໍ່ມີຜ້າກັ້ງໃດໆຈີກແນວນີ້.

## ອ່ານລູກາ 23:45-49 ຄືນສູ່ສ້ວນ

ກ. ຂໍ້ 45-46 ພຣະອົງຊົງຮ້ອງໄຫ້ແລະກ່າວວ່າ *"ພຣະບິດາເອີຍ, ຂ້ານ້ອຍຂໍຝາກຈິດວິນຍານຂອງຂ້ານ້ອຍໄວ້ໃນພຣະຫັດຂອງພຣະອົງ ເມື່ອພຣະອົງຊົງກ່າວຢ່າງນັ້ນແລ້ວກໍສິ້ນພຣະຊົນ.* ແປວ່າຊີວິດແລະຈິດວິນຍານຂອງພຣະເຢຊູນັ້ນສຸດແລ້ວແຕ່ພຣະບິດາ ຫລືໃຫ້ເປັນຕາມນ້ຳພຣະທັຍຂອງພຣະບິດາ.
ຂ. ຂໍ້ 47-48 ພວກທະຫານແລະປະຊາຊົນທີ່ເຝົ້າຢູ່ໃກ້ຊິດໄມ້ກາງແຂນໄດ້ເຫັນເຫດການນີ້ເກີດຂຶ້ນຈຶ່ງຍອມຮັບວ່າພຣະເຢຊູບໍ່ມີຄວາມຜິດ.
ຄ. ຂໍ້ 49 ຜູ້ທີ່ຮັກພຣະເຢຊູກໍຕິດຕາມໄປເບິ່ງເຂົາຂ້າພຣະອົງ.

## ຄຳຖາມ:

1. ພຣະເຢຊູຕາຍທີ່ໄມ້ກາງແຂນເປັນຫຍັງຈຶ່ງເວົ້າວ່າເພິ່ນຕາຍໃຊ້ໜີ້ເຮົາ?

2. ເປັນຫຍັງພຣະເຢຊູຈຶ່ງຕາຍແບບທຸກທໍຣະມານຫລາຍປານນັ້ນ?

3. ຫາກພຣະອົງບໍ່ຕາຍທີ່ໄມ້ກາງແຂນແທນຄວາມຜິດບາບຂອງເຮົາແລ້ວແມ່ນໃຜຈະຕາຍແທນ?

4. ໃນໜັງ Passion Of Christ ເຮັດໃຫ້ທ່ານເຫັນຮູບພາບຄວາມບາບຂອງຕົນເອງຢ່າງໃດ?

5. ທ່ານຈະຂອບພຣະຄຸນພຣະເຢຊູດ້ວຍການກະທຳແນວໃດແດ່?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ຄຣິສມັສ
# ແມ່ນຂ່າວດີທົ່ວໂລກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ ໒:1-20

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ລູກາ ໒:1-20

**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອເຮົາເຂົ້າໃຈເຣື່ອງຂອງຄຣິສມັສເຮົາກໍຈະຍອມເຊື່ອພຣະອົງທັນທີ.

**ຄຳຖາມເພື່ອການສຳຣວດ:** ວັນຄຣິສມັສນຳຄວາມຍິນດີມາສູ່ເຮົາຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າພຣະເຈົ້າສົ່ງພຣະເຢຊູລົງມາເກີດເພື່ອມະນຸດທັງຫລາຍຈະໄດ້ພົ້ນ

**ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ພຣະເຈົ້າຊົງສ້າງມະນຸດທຸກຄົນໃນຮູບຮ່າງຄ້າຍຄືພຣະອົງ.
- ນຳຄອບຄົວເຖິງຄວາມຈະເຣີນໃນພຣະເຈົ້າ

## ບົດນຳ

ຄຣິສມັສເປັນຣະດູການອັນສົດຊື່ນແຈ່ມໃສ ຫລາຍຄອບຄົວກໍພາກັນຕັ້ງຕົ້ນຄຣິສມັສທີ່ບ້ານເຮືອນຂອງຕົນແລ້ວປະດັບປະດາດ້ວຍໄຟແສງສີແລະເຄື່ອງເອ້ຕ່າງໆຕາມຕົ້ນຄຣິສມັສນັ້ນ ສ່ວນກ້ອງຕົ້ນໄມ້ນັ້ນກໍມີຂອງຂວັນຕ່າງໆຢ່າງຫລວງຫລາຍ. ທີ່ສາທາຣະນະກໍມີການເອ້ດ້ວຍໄຟແສງສີ ແລະສຽງເພງຄຣິສມັສເພື່ອໃຫ້ຜູ້ຄົນໄດ້ເຫັນຄວາມງາມແລະຄວາມສຳຄັນ ຂອງຄຣິສມັສ ແມ່ນວັນເກີດຂອງພຣະຜູ້ໂຜດໃຫ້ພົ້ນລົງມາເກີດເປັນມະນຸດ. ການບັງເກີດຂອງພຣະເຢຊູຄຣິດເປັນ ເໝືອນຂອງຂວັນທີ່ມາຈາກພຣະເຈົ້າທີ່ມອບໃຫ້ມະນຸດ ດ້ວຍເຫດນີ້ເຮົາທັງຫລາຍຈຶ່ງຊື້ຂອງຂວັນໃຫ້ກັນແລະກັນ ດ້ວຍຄວາມຊົມຊື່ນຍິນດີ, ໂດຍສເພາະຢ່າງຍິ່ງສຽງເພງຄຣິສມັສຟັງແລ້ວກໍຟັງອີກໂດຍບໍ່ຮູ້ເບື່ອ.

## ຂໍໃຫ້ຜູ້ນຶ່ງອ່ານ ລູກາ ໒:1-5 ຍາມພິເສດ

1. ຕຽມກ່ອງເປົ່າແລ້ວຫໍ່ເປັນຂອງຂວັນມາຫ້ອງຮຽນບອກນັກຮຽນວ່າ ພຣະເຈົ້າປະທານພຣະເຢຊູເປັນຂອງຂວັນໃຫ້ພວກເຮົາທຸກຄົນ. (ຫາກມີຂອງຂວັນແທ້ຍິ່ງດີ)
   - ກ. ຂອງຂວັນເປັນສິ່ງທີ່ໄດ້ຮັບລ້າງ ຈະເປັນຣາຄາທໍ່ໃດກໍດີໃຈເພາະໄດ້ລ້າ.
   - ຂ. ເພິ່ນມອບໃຫ້ຜູ້ໃດຜູ້ນັ້ນຈຳຕ້ອງຮັບເອົາເປັນຂອງສ່ວນຕົວ ແລະເປີດຂອງຂວັນແລ້ວນຳໄປໃຊ້ສ່ວນຕົວ.
   - ຄ. ພຣະເຈົ້າປະທານພຣະເຢຊູເປັນຄືຂອງຂວັນທີ່ເຮົາໄດ້ຮັບ ແຕ່ຂອງຂວັນນີ້ມີຄ່າສູງສຸດ.

໒. ອະທິບາຍຂໍ້ພຣະຄັມພີ
   - ກ. ຂໍ້ 1 ກາຍຊາໂອຄຸໂຕ ເປັນຈອມຈັກກະພັດອົງແຣກຂອງໂຣມັນຈຶ່ງມີການກວດກາຈຳນວນພົລເມືອງ
   - ຂ. ຂໍ້ ໒ ກີເຣນີໂອນເປັນ ເຈົ້າເມືອງປົກຄອງເມືອງຊີເຣັຽ

ຄ. ຂໍ້ 3-4 ໂຢເຊບພານາງມາຣີອາຜູ້ເປັນຄູ່ໝັ້ນໄປລົງທະບຽນເປັນເມືອງ ໄປລົງທະບຽນແຂວງຢູດາຍ ເມືອງຂອງກະສັດດາວິດ ບ້ານເບັດເລເຮັມ ເພາະວ່າໂຢເຊບເປັນເຊື້ອສາຍຂອງດາວິດ.

ງ. ດ້ວຍເຫດການທັງໝົດນີ້ຈຶ່ງຮ້ອງວ່າຍາມພິເສດ, ພຣະເຢຊູບັງເກີດແບບພິເສດ ດ້ວຍວ່າໃນສມັຍນັ້ນເປັນໄປບໍ່ໄດ້ທີ່ຜູ້ຍິງຈະມີລູກປາສຈາກຜູ້ຊາຍ.

## ຂໍໃຫ້ຜູ້ນຶ່ງອ່ານ 2:6-7 ໂລກບໍ່ມີບ່ອນຫວ້າງ

ກ. ຂໍ້ 5-7 ເມື່ອໄປເຖິງກໍບໍ່ມີບ່ອນພັກດ້ວຍໃຜໆກໍກັບໄປລົງທະບຽນຕາມເຊື້ອສາຍຂອງຕົນ ຝ່າຍໂຢເຊບຈຶ່ງໄປຂໍພັກຢູ່ທີ່ຄອກສັດເພາະນາງມາຣີອາຈວນຈະເກີດລູກ ແລະກໍເກີດລູກທີ່ຄອກສັດນັ້ນ.

ຂ. ພຣະເຈົ້າສົ່ງພຣະບຸດຂອງພຣະອົງລົງມາເກີດທີ່ໂລກພຣະອົງສ້າງ ແຕ່ບໍ່ມີບ່ອນຫວ້າງສໍາລັບພຣະບຸດຂອງພຣະອົງ.

## ຂໍໃຫ້ຜູ້ນຶ່ງອ່ານ2: 8-20 ເທວະດາປາກົດຕົວ

ກ. ຂໍ້ 8 ພວກລ້ຽງແກະກຸ່ມນີ້ເປັນກຸ່ມຍາກຈົນ ມີອາຊີບລ້ຽງແກະຂາຍ ຈຶ່ງນອນເຝົ້າເພື່ອປົກປ້ອງຝູງແກະ.

ຂ. ຂໍ້ 9 ເທວະດາເລືອກປາກົດຕົວຕໍ່ພວກລ້ຽງແກະຍາກຈົນກຸ່ມນີ້ໃນລັກສະນະພິເສດ ເພື່ອບອກຂ່າວດີ.

ຄ. ຂໍ້ 10-12 ເທວະດາບອກເຂົາວ່າ ຢ່າຊູ່ຢ້ານ ໝາຍຄວາມວ່າເທວະດາບໍ່ເຮັດອັນຕະຣາຍ ແລະບອກຂ່າວດີໃຫ້ພວກເຂົາຮູ້ເປັນກຸ່ມແຮກ.

ງ. ຂໍ້ 13-14 ກຸ່ມເທວະດາລົງມາຈາກສວັນຮ້ອງເພງສັຣເສີນພຣະກຸມມານ (ຫາກແມ່ນດຽວນີ້ຈະແມ່ນເພງ Happy Birthday).

ຈ. ຂໍ້ 15-20 ພວກລ້ຽງແກະຢ້ຽມຢາມພຣະກຸມມານນ້ອຍ ເມື່ອເຫັນແລ້ວກໍເລົ່າເຣື່ອງຂອງພຣະເຢຊູໃຫ້ຜູ້ອື່ນຟັງ ດ້ວຍເຫດນີ້ຄົນລ້ຽງແກະຈຶ່ງກາຍເປັນກຸ່ມຄົນປະກາດຂ່າວປະເສີດກຸ່ມແຮກ.

<u>ໝາຍເຫດ:</u> ຄໍາຖາມຕ່າງໆນັ້ນໃຫ້ໃຊ້ຄໍາຖາມໃນບົດຮຽນ

*ສຈ. ດຣ. ທູນພັນ ວົງສຸຣິດທ໌*